ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 331 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 27.10.2017.

# ດຳລັດ
## ວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມ ໜັງສືສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1336/ອຄ.ກສພນ, ລົງວັນທີ 16 ສິງຫາ 2017.

## ນາຍົກລັດຖະມົນຕີ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ການດຳເນີນທຸລະກິດນ້ຳມັນເຊື້ອໄຟ ຢູ່ ສປປ ລາວ ເພື່ອເຮັດໃຫ້ການດຳເນີນທຸລະກິດດັ່ງກ່າວຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ທຸລະກິດນ້ຳມັນເຊື້ອໄຟ**

ທຸລະກິດນ້ຳມັນເຊື້ອໄຟ ແມ່ນການດຳເນີນທຸລະກິດກ່ຽວກັບການນຳເຂົ້າ, ສົ່ງອອກ, ຜະລິດ, ປຸງແຕ່ງ, ຈຳໜ່າຍພາຍໃນ, ປ້ຳ ແລະ ການໃຫ້ບໍລິການກ່ຽວກັບນ້ຳມັນເຊື້ອໄຟ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ນ້ຳມັນເຊື້ອໄຟ** ໝາຍເຖິງ ຜະລິດຕະພັນນ້ຳມັນ ຄື: ນ້ຳມັນແອັດຊັງ, ນ້ຳມັນກາຊວນ, ນ້ຳມັນກາດເຮືອບິນ, ນ້ຳມັນກາດໄຕ້, ນ້ຳມັນເຕົາ, ນ້ຳມັນເຊື້ອໄຟຊີວະພາບ ແລະ ນ້ຳມັນເຊື້ອໄຟອື່ນ ຕາມການກຳນົດຂອງອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ;

2. **ນ້ຳມັນເຊື້ອໄຟນອກລະບົບ** ໝາຍເຖິງ ນ້ຳມັນເຊື້ອໄຟ ແລະ ນ້ຳມັນດິບ ທີ່ນຳເຂົ້າ, ຜະລິດ, ປຸງແຕ່ງ ຫຼື ຈຳໜ່າຍ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ຖືກຕ້ອງຕາມການອະນຸຍາດນຳເຂົ້າ ແລະ ນຳໃຊ້ບໍ່ຖືກຕ້ອງຕາມເປົ້າໝາຍ, ບໍ່ໄດ້ເສຍພັນທະຕ່າງໆ ຫຼື ບໍ່ໄດ້ແຈ້ງພາສີເປັນລາຍລະອຽດ ຫຼື ເສຍພັນທະບໍ່ຄົບ;

3. **ປ້ຳບໍລິສັດລົງທຶນເອງ** ໝາຍເຖິງ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ຊຶ່ງແມ່ນບໍລິສັດຈຳໜ່າຍພາຍໃນ ເປັນຜູ້ລົງທຶນກໍ່ສ້າງ ແລະ ດຳເນີນການຂາຍຍ່ອຍດ້ວຍຕົນເອງ ໂດຍໄດ້ຂຶ້ນທະບຽນເປັນທຸລະກິດຂາຍຍ່ອຍນ້ຳມັນເຊື້ອໄຟ;

4. **ປ້ຳຕົວແທນ** ໝາຍເຖິງ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ຊຶ່ງແມ່ນບຸກຄົນ ຫຼື ນິຕິບຸກຄົນ ເປັນຕົວແທນຈຳໜ່າຍໃຫ້ບໍລິສັດຈຳໜ່າຍພາຍໃນໃດໜຶ່ງ ໂດຍໄດ້ຂຶ້ນທະບຽນເປັນທຸລະກິດຂາຍຍ່ອຍນ້ຳມັນເຊື້ອໄຟ;

5. **ລູກຄ້າຂອງຕົນ** ສຳລັບບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ໝາຍເຖິງ ຜູ້ຊື້ນ້ຳມັນເຊື້ອໄຟ ຈາກບໍລິສັດນຳເຂົ້າ-ສົ່ງອອກນ້ຳມັນເຊື້ອໄຟ ທີ່ເປັນໂຄງການສຳປະທານ ຫຼື ໂຄງການລົງທຶນ ທີ່ລັດຖະບານອະນຸມັດ ຫຼື ບໍລິສັດຈຳໜ່າຍພາຍໃນ ທີ່ມີສັນຍາຊື້-ຂາຍນຳກັນ; ລູກຄ້າຂອງຕົນ ສຳລັບບໍລິສັດຈຳໜ່າຍພາຍໃນ ໝາຍເຖິງ ຜູ້ຊື້ນ້ຳມັນເຊື້ອໄຟ ຈາກບໍລິສັດຈຳໜ່າຍພາຍໃນ ທີ່ເປັນໂຄງການທົ່ວໄປ, ບໍລິສັດກໍ່ສ້າງ, ບໍລິສັດຂົນສົ່ງ ທີ່ມີສັນຍາຊື້-ຂາຍນຳກັນ ຊຶ່ງບໍ່ລວມເອົາໂຄງການສຳປະທານ ຫຼື ໂຄງການລົງທຶນ ທີ່ລັດຖະບານອະນຸມັດ;

6. **ສາງນ້ຳມັນເຊື້ອໄຟ** ໝາຍເຖິງ ພື້ນຖານໂຄງລ່າງເກັບຮັກສານ້ຳມັນເຊື້ອໄຟ ຕັ້ງຢູ່ເທິງ ຫຼື ໃຕ້ດິນ ໃນຮູບແບບຖັງ, ມີລະບົບຮັບ, ລະບົບຈ່າຍ, ລະບົບຮັກສາຄວາມປອດໄພ ແລະ ຮັກສາສິ່ງແວດລ້ອມ ທີ່ຖືກຕ້ອງຕາມມາດຕະຖານເຕັກນິກ;

7. **ເຄື່ອງໝາຍ** ໝາຍເຖິງ ກາໝາຍ ຫຼື ສັນຍາລັກ (Logo) ຂອງທຸລະກິດນ້ຳມັນເຊື້ອໄຟໃດໜຶ່ງ ທີ່ໄດ້ຈົດທະບຽນເຄື່ອງໝາຍການຄ້າ ນຳຂະແໜງການທີ່ກ່ຽວຂ້ອງ.

8. **ລາຄານ້ຳມັນເຊື້ອໄຟຕະຫຼາດໂລກ** ແມ່ນລາຄານ້ຳມັນເຊື້ອໄຟທີ່ຊື້-ຂາຍໃນຕະຫຼາດໂລກ ຊຶ່ງເປັນລາຄາອ້າງອີງໃຫ້ແກ່ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດລາຄາຂາຍຍົກ-ຂາຍຍ່ອຍພາຍໃນ ແລະ ປະກາດໃຊ້.

**ມາດຕາ 4 ຫຼັກການພື້ນຖານຂອງການດຳເນີນທຸລະກິດນ້ຳມັນເຊື້ອໄຟ**

ການດຳເນີນທຸລະກິດນ້ຳມັນເຊື້ອໄຟ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບນະໂຍບາຍ ແລະ ກົດໝາຍ;
2. ຄຸ້ມຄອງ ແລະ ດັດສົມລາຄາ ຕາມກົນໄກຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ;
3. ຄຸ້ມຄອງ ແລະ ດັດສົມ ທຸລະກິດນ້ຳມັນເຊື້ອໄຟ ໃຫ້ເໝາະສົມຕາມສະພາບການພັດທະນາເສດຖະກິດ-ສັງຄົມແຕ່ລະໄລຍະ;
4. ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້;
5. ສອດຄ່ອງ ແລະ ຕອບສະໜອງ ຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງຊາດ;
6. ຮັບປະກັນການສະໜອງນ້ຳມັນເຊື້ອໄຟ ຕາມຄວາມຕ້ອງການ ຕາມແຜນຍຸດທະສາດແຫ່ງຊາດທາງດ້ານພະລັງງານ;
7. ຮັບປະກັນຄວາມໝັ້ນຄົງທາງເສດຖະກິດຂອງຊາດ, ຄວາມປອດໄພຂອງສັງຄົມ ແລະ ສິ່ງແວດລ້ອມ;
8. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ມາດຕາ 5 ຂອບເຂດການນຳໃຊ້

ດຳລັດສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດນ້ຳມັນເຊື້ອໄຟ ຢູ່ ສປປ ລາວ ຍົກເວັ້ນ ທຸລະກິດການຜະລິດ ແລະ ການປຸງແຕ່ງນ້ຳມັນເຊື້ອໄຟ.

# ພາກທີ II
## ການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດນ້ຳມັນເຊື້ອໄຟ
# ໝວດທີ 1
## ການສ້າງຕັ້ງທຸລະກິດນ້ຳມັນເຊື້ອໄຟ

**ມາດຕາ 6 ຂັ້ນຕອນການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດນ້ຳມັນເຊື້ອໄຟ**

ການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດນ້ຳມັນເຊື້ອໄຟ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ແຈ້ງຂຶ້ນທະບຽນວິສາຫະກິດ;
2. ສ້າງບົດປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ ຍົກເວັ້ນທຸລະກິດໃຫ້ເຊົ່າພາຫະນະຂົນສົ່ງ ແລະ ທຸລະກິດໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ;
3. ຂໍອະນຸຍາດປຸກສ້າງ ສາງ ຫຼື ປ້ຳ ນ້ຳມັນເຊື້ອໄຟ ຍົກເວັ້ນທຸລະກິດໃຫ້ເຊົ່າພາຫະນະຂົນສົ່ງ ແລະ ທຸລະກິດໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ;
4. ຂໍອະນຸຍາດເຄື່ອນໄຫວທຸລະກິດນ້ຳມັນເຊື້ອໄຟ.

**ມາດຕາ 7 ເງື່ອນໄຂການຂຶ້ນທະບຽນວິສາຫະກິດນ້ຳມັນເຊື້ອໄຟ**

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດນ້ຳມັນເຊື້ອໄຟ ຕ້ອງສ້າງຕັ້ງເປັນບໍລິສັດ ເພື່ອເຄື່ອນໄຫວສະເພາະເທົ່ານັ້ນ ຕາມກົດໝາຍ.

- ການຂຶ້ນທະບຽນວິສາຫະກິດທຸລະກິດນ້ຳມັນເຊື້ອໄຟ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ທຶນຈົດທະບຽນ:
   - 1.1 ບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ມີ: ໜຶ່ງຮ້ອຍຫ້າສິບຕື້ (150.000.000.000) ກີບ ຂຶ້ນໄປ, ໃນນີ້ຕ້ອງມີທຶນໝູນວຽນ ຫົກສິບຕື້ (60.000.000.000) ກີບ ຂຶ້ນໄປ;
   - 1.2 ບໍລິສັດຈຳໜ່າຍພາຍໃນ ມີ: ຫ້າສິບຕື້ (50.000.000.000) ກີບ ຂຶ້ນໄປ, ໃນນີ້ຕ້ອງມີທຶນໝູນວຽນ ຫ້າຕື້ (5.000.000.000) ກີບ ຂຶ້ນໄປ;
   - 1.3 ປ້ຳນ້ຳມັນເຊື້ອໄຟ ມີ: ໜຶ່ງຕື້ (1.000.000.000) ກີບ ຂຶ້ນໄປ ສຳລັບປ້ຳບໍລິສັດລົງທຶນເອງ, ສາມຮ້ອຍລ້ານ (300.000.000) ກີບ ຂຶ້ນໄປ ສຳລັບປ້ຳຕົວແທນ.
   - 1.4 ບໍລິສັດໃຫ້ເຊົ່າສາງນ້ຳມັນເຊື້ອໄຟ ມີ: ສອງຕື້ (2.000.000.000) ກີບ ຂຶ້ນໄປ, ໃນນີ້ຕ້ອງມີທຶນໝູນວຽນ ຫ້າຮ້ອຍລ້ານ (500.000.000) ກີບ ຂຶ້ນໄປ;
   - 1.5 ບໍລິສັດໃຫ້ເຊົ່າພາຫະນະຂົນສົ່ງນ້ຳມັນເຊື້ອໄຟ ມີ: ຊາວຕື້ (20.000.000.000) ກີບ ຂຶ້ນໄປ, ໃນນີ້ຕ້ອງມີທຶນໝູນວຽນ ສອງຕື້ (2.000.000.000) ກີບ ຂຶ້ນໄປ;
   - 1.6 ບໍລິສັດໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ມີ: ສາມສິບຕື້ (30.000.000.000) ກີບ ຂຶ້ນໄປ, ໃນນີ້ຕ້ອງມີທຶນໝູນວຽນ ສາມຕື້ (3.000.000.000) ກີບ ຂຶ້ນໄປ;
2. ມີສະຖານທີ່ຕັ້ງຂອງສາງ ຢູ່ຫ່າງຈາກເຂດຊຸມຊົນ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ແຫຼ່ງນ້ຳ ໃນລັດສະໝີ ໜຶ່ງພັນ (1.000) ແມັດ ຂຶ້ນໄປ ແລະ ມີເນື້ອທີ່ພຽງພໍທີ່ຈະສ້າງສາງ ສາມາດບັນຈຸໄດ້ ດັ່ງນີ້:
   - ບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ມີ: ຫ້າລ້ານ (5.000.000) ລິດ ຂຶ້ນໄປ;
   - ບໍລິສັດຈຳໜ່າຍພາຍໃນ ມີ: ໜຶ່ງລ້ານ (1.000.000) ລິດ ຂຶ້ນໄປ;
   - ບໍລິສັດໃຫ້ເຊົ່າສາງນ້ຳມັນເຊື້ອໄຟ ມີ: ຫ້າແສນ (500.000) ລິດ ຂຶ້ນໄປ;

3. ປ້ຳນ້ຳມັນເຊື້ອໄຟ:

3.1 ສະຖານທີ່ຕັ້ງຂອງປ້ຳນ້ຳມັນເຊື້ອໄຟຕ້ອງຢູ່ຫ່າງຈາກເຂດຊຸມຊົນ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ແຫຼ່ງນ້ຳ, ທາງໂຄ້ງ, ທາງແຍກ ແລະ ທາງສູງຊັນ ໜຶ່ງຮ້ອຍ (100) ແມັດ ຂຶ້ນໄປ ແລະ ຕ້ອງຫ່າງຈາກປ້ຳນ້ຳມັນເຊື້ອໄຟທີ່ສ້າງຕັ້ງແລ້ວ ໜຶ່ງພັນ (1.000) ແມັດ ຂຶ້ນໄປ ຕາມທິດດຽວກັນ ແລະ ບໍ່ໃຫ້ນອນຢູ່ໃນເຂດສະຫງວນຂອງທາງຫຼວງທຸກປະເພດ;

3.2 ຄວາມກວ້າງຕິດໜ້າທາງຂອງປ້ຳນ້ຳມັນເຊື້ອໄຟ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:
- ເຂດພູດອຍ, ຫ່າງໄກສອກຫຼີກ ຊາວ (20) ແມັດ ຂຶ້ນໄປ;
- ເຂດພູພຽງ, ທົ່ງພຽງ, ນອກຕົວເມືອງ ສາມສິບ (30) ແມັດ ຂຶ້ນໄປ;
- ເຂດຕົວເມືອງ ສີ່ສິບ (40) ແມັດ ຂຶ້ນໄປ.

**ມາດຕາ 8 ເອກະສານປະກອບການຂຶ້ນທະບຽນວິສາຫະກິດທຸລະກິດນ້ຳມັນເຊື້ອໄຟ**

ນອກຈາກທີ່ກຳນົດໄວ້ ໃນກົດໝາຍວ່າດ້ວຍວິສາຫະກິດແລ້ວ ການຂຶ້ນທະບຽນວິສາຫະກິດທຸລະກິດນ້ຳມັນເຊື້ອໄຟ ຍັງຕ້ອງປະກອບເອກະສານເພີ່ມເຕີມ ດັ່ງນີ້:

1. ບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ, ບໍລິສັດຈຳໜ່າຍພາຍໃນ ແລະ ບໍລິສັດໃຫ້ເຊົ່າສາງນ້ຳມັນເຊື້ອໄຟ:

1.1 ບົດວິພາກເສດຖະກິດ-ເຕັກນິກ ຕາມແບບພິມທີ່ອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ກຳນົດ;

1.2 ໃບຢັ້ງຢືນສະຖານທີ່ຕັ້ງສາງ ທີ່ຜ່ານການຢັ້ງຢືນຈາກອົງການປົກຄອງບ້ານ ແລະ ໃບຢັ້ງຢືນກຳມະສິດຂອງສາງ;

1.3 ໃບຢັ້ງຢືນຄວາມຖືກຕ້ອງຂອງສະຖານທີ່ຕັ້ງຂອງສາງ ຈາກຂະແໜງໂຍທາທິການ ແລະ ຂົນສົ່ງ.

2. ປ້ຳນ້ຳມັນເຊື້ອໄຟ:

2.1 ບົດວິພາກເສດຖະກິດ-ເຕັກນິກ;

2.2 ໃບທະບຽນວິສາຫະກິດຂອງບໍລິສັດຈຳໜ່າຍພາຍໃນ, ຂໍ້ຕົກລົງສ້າງຕັ້ງ ແລະ ໃບມອບສິດ ສຳລັບປ້ຳບໍລິສັດລົງທຶນເອງ;

2.3 ໃບຢັ້ງຢືນການເປັນປ້ຳຕົວແທນ ແລະ ສັນຍາຊື້-ຂາຍນ້ຳມັນເຊື້ອໄຟ ສຳລັບປ້ຳຕົວແທນ;

2.4 ໃບຢັ້ງຢືນຄວາມຖືກຕ້ອງຂອງສະຖານທີ່ຕັ້ງຂອງປ້ຳ ຈາກຂະແໜງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 9 ການພິຈາລະນາຂຶ້ນທະບຽນວິສາຫະກິດທຸລະກິດນ້ຳມັນເຊື້ອໄຟ**

ການແຈ້ງຂຶ້ນທະບຽນວິສາຫະກິດທຸລະກິດນ້ຳມັນເຊື້ອໄຟ ໃຫ້ປະຕິບັດຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 2
## ການເຄື່ອນໄຫວທຸລະກິດຂອງບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ

**ມາດຕາ 10 ບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ**

ບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ແມ່ນ ບໍລິສັດທີ່ເຄື່ອນໄຫວທຸລະກິດ ກ່ຽວກັບ ການນຳເຂົ້າ ເພື່ອຂາຍຍົກໃຫ້ບໍລິສັດຈຳໜ່າຍພາຍໃນ, ສົ່ງອອກ, ນຳເຂົ້າ ເພື່ອສົ່ງອອກຕໍ່ ຫຼື ຜ່ານແດນ.

### ມາດຕາ 11 ການຂໍອະນຸຍາດເຄື່ອນໄຫວທຸລະກິດຂອງບໍລິສັດນໍາເຂົ້າ ແລະ ສົ່ງອອກນໍ້າມັນເຊື້ອໄຟ

ພາຍຫຼັງໄດ້ໃບທະບຽນວິສາຫະກິດ, ໃບຢັ້ງຢືນດ້ານສິ່ງແວດລ້ອມ, ໃບຢັ້ງຢືນຄວາມຖືກຕ້ອງການກໍ່ສ້າງ ສາງນໍ້າມັນເຊື້ອໄຟ ແລະ ສໍາເລັດຕາມເງື່ອນໄຂຕ່າງໆ ທີ່ກໍານົດໃນມາດຕາ 14 ຂອງດໍາລັດສະບັບນີ້ ໃຫ້ສະເໜີຕໍ່ກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອຂໍໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດນໍາເຂົ້າ ແລະ ສົ່ງອອກນໍ້າມັນເຊື້ອໄຟ ໂດຍປະກອບເອກະສານຕາມທີ່ໄດ້ກໍານົດໄວ້ໃນມາດຕາ 12 ຂອງດໍາລັດສະບັບນີ້, ພາຍຫຼັງໄດ້ຮັບໃບຢັ້ງຢືນແລ້ວ ຈຶ່ງສາມາດດໍາເນີນການເຄື່ອນໄຫວທຸລະກິດ.

### ມາດຕາ 12 ເອກະສານປະກອບຂໍອະນຸຍາດເຄື່ອນໄຫວທຸລະກິດຂອງບໍລິສັດນໍາເຂົ້າ ແລະ ສົ່ງອອກນໍ້າມັນເຊື້ອໄຟ

ການຂໍອະນຸຍາດເຄື່ອນໄຫວທຸລະກິດຂອງບໍລິສັດນໍາເຂົ້າ ແລະ ສົ່ງອອກນໍ້າມັນເຊື້ອໄຟ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄໍາຮ້ອງຂໍອະນຸຍາດເຄື່ອນໄຫວທຸລະກິດຂອງບໍລິສັດນໍາເຂົ້າ ແລະ ສົ່ງອອກນໍ້າມັນເຊື້ອໄຟ ຕາມແບບພິມທີ່ກະຊວງອຸດສາຫະກໍາ ແລະ ການຄ້າ ກໍານົດ;
2. ໃບທະບຽນວິສາຫະກິດ;
3. ໃບຢັ້ງຢືນການມອບເລກປະຈໍາຕົວຜູ້ເສຍອາກອນ;
4. ໃບຢັ້ງຢືນຄວາມຖືກຕ້ອງຂອງການກໍ່ສ້າງສາງນໍ້າມັນເຊື້ອໄຟ;
5. ໃບຢັ້ງຢືນດ້ານສິ່ງແວດລ້ອມ ແລະ ສັງຄົມ ກ່ຽວກັບ ສາງນໍ້າມັນເຊື້ອໄຟ;
6. ໃບຢັ້ງຢືນການກວດຜ່ານກ່ຽວກັບຄວາມປອດໄພທາງດ້ານອັກຄີໄພຂອງສາງນໍ້າມັນເຊື້ອໄຟ;
7. ໃບຢັ້ງຢືນຜ່ານການຝຶກອົບຮົມກ່ຽວກັບທຸລະກິດນໍ້າມັນເຊື້ອໄຟ ອອກໃຫ້ໂດຍອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ;
8. ໜັງສືຢັ້ງຢືນການເປັນຕົວແທນ ຫຼື ສັນຍາຊື້-ຂາຍ ນໍ້າມັນເຊື້ອໄຟຈາກ ບໍລິສັດນໍ້າມັນເຊື້ອໄຟຕ່າງປະເທດບໍ່ຫ້ໃດໜຶ່ງ;
9. ໃບຢັ້ງຢືນເປັນສະມາຊິກຂອງສະມາຄົມນໍ້າມັນເຊື້ອໄຟ ຢູ່ ສປປ ລາວ;
10. ບັນຊີເງິນຝາກຢູ່ທະນາຄານ ທີ່ຕັ້ງຢູ່ ສປປ ລາວ;
11. ບັນຊີຊັບສິນຂອງບໍລິສັດ ລວມມີ: ບັນຊີສາງເກັບນໍ້າມັນເຊື້ອໄຟ, ບັນຊີພາຫະນະຂົນສົ່ງນໍ້າມັນເຊື້ອໄຟ, ບັນຊີເຄື່ອງກວດສອບຄຸນນະພາບນໍ້າມັນເຊື້ອໄຟ.

### ມາດຕາ 13 ການອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດນໍາເຂົ້າ ແລະ ສົ່ງອອກນໍ້າມັນເຊື້ອໄຟ

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 12 ຂອງດໍາລັດສະບັບນີ້, ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງປະສານສົມທົບກັບຂະແໜງການກ່ຽວຂ້ອງ ລົງກວດກາ ພາຍໃນ ຫ້າວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານເປັນຕົ້ນໄປ.

ຖ້າເຫັນວ່າຄໍາຮ້ອງ ແລະ ເອກະສານປະກອບ ຫາກມີເນື້ອໃນບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ຮ້ອງຂໍ ພາຍໃນ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ເພື່ອໃຫ້ຜູ້ຮ້ອງຂໍແກ້ໄຂໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

ໃນກໍລະນີ ບໍ່ສາມາດອອກໃບຢັ້ງຢືນໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ ພາຍໃນ ຊາວຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ເປັນຕົ້ນໄປ.

ຖ້າເຫັນວ່າເອກະສານ ຫາກຖືກຕ້ອງ ແລະ ຄົບຖ້ວນ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ພາຍໃນ ສາມສິບວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ເປັນຕົ້ນໄປ.

ໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ມີອາຍຸນຳໃຊ້ ສາມປີ ແລະ ສາມາດຕໍ່ໄດ້.

**ມາດຕາ 14 ເງື່ອນໄຂການເຄື່ອນໄຫວທຸລະກິດຂອງບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ**

ການເຄື່ອນໄຫວທຸລະກິດຂອງບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດນຳເຂົ້າ ແລະ ສົ່ງອອກ ນ້ຳມັນເຊື້ອໄຟ;
2. ໄດ້ລົງທຶນ ແລະ ຖອກທຶນຈົດທະບຽນ ຕາມທີ່ກຳນົດໄວ້ໃນ ຂໍ້ 1 ມາດຕາ 7 ຂອງດຳລັດສະບັບນີ້;
3. ຖືບັນຊີຖືກຕ້ອງຕາມກົດໝາຍ;
4. ມີບັນຊີເງິນຝາກຢູ່ທະນາຄານ ທີ່ຕັ້ງຢູ່ ສປປ ລາວ ແລະ ການຊື້-ຂາຍນ້ຳມັນເຊື້ອໄຟຕ້ອງຊຳລະຜ່ານທະນາຄານ;
5. ມີນ້ຳມັນເຊື້ອໄຟແຮສຳຮອງໄວ້ໃຊ້ໃນກໍລະນີສຸກເສີນ ໃຫ້ໄດ້ຢ່າງໜ້ອຍ ຊາວເອັດວັນ ຕາມຕົວເລກສະເລ່ຍການສະໜອງປະຈຳວັນຂອງປີຜ່ານມາ ເພື່ອສະໜອງໃຫ້ແກ່ບໍລິສັດຈຳໜ່າຍພາຍໃນ ແລະ ລູກຄ້າຂອງຕົນ;
6. ສາມາດນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟ ສອງຮ້ອຍລ້ານ ລິດ (200.000.000) ຂຶ້ນໄປ ຕໍ່ປີ;
7. ມີເຄື່ອງໝາຍບໍລິສັດເປັນຂອງຕົນເອງຊຶ່ງໄດ້ຈົດທະບຽນເຄື່ອງໝາຍຖືກຕ້ອງຕາມກົດໝາຍ;
8. ມີສາງເກັບນ້ຳມັນເຊື້ອໄຟເປັນຂອງຕົນເອງ ທີ່ຕິດເຄື່ອງໝາຍຂອງບໍລິສັດ, ສາມາດບັນຈຸນ້ຳມັນໄດ້ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2 ມາດຕາ 7 ຂອງດຳລັດສະບັບນີ້;
9. ມີພາຫະນະຂົນສົ່ງນ້ຳມັນເຊື້ອໄຟ ທີ່ເປັນຂອງບໍລິສັດ ຫຼື ໃນກຸ່ມບໍລິສັດ ຢ່າງໜ້ອຍ 20 ຄັນ; ພາຫະນະຂົນສົ່ງແຕ່ລະຄັນ ຕ້ອງໄດ້ມາດຕະຖານເຕັກນິກ, ຂຶ້ນທະບຽນ ແລະ ສອບທຽບ ຕາມການກຳນົດຂອງຂະແໜງການທີ່ກ່ຽວຂ້ອງ, ຕ້ອງມີເຄື່ອງໝາຍ ແລະ ສີ ທີ່ເປັນສັນຍາລັກຂອງບໍລິສັດ;
10. ມີຕົວແທນຈຳໜ່າຍນ້ຳມັນເຊື້ອໄຟ ທີ່ເປັນບໍລິສັດຈຳໜ່າຍພາຍໃນ;
11. ມີຫ້ອງກວດສອບຄຸນນະພາບນ້ຳມັນເຊື້ອໄຟທີ່ໄດ້ຂຶ້ນທະບຽນຖືກຕ້ອງ ຈາກກະຊວງວິທະຍາສາດ ແລະ ເຕັກໂນໂລຊີ;
12. ມີພະນັກງານ ຢ່າງໜ້ອຍ ສາມຄົນ ທີ່ມີໃບຢັ້ງຢືນຜ່ານການຝຶກອົບຮົມກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ ອອກໃຫ້ໂດຍອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ;
13. ມີປະກັນໄພຕາມກົດໝາຍວ່າດ້ວຍການປະກັນໄພ.

ສຳລັບບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວກ່ອນດຳລັດສະບັບນີ້ ຕ້ອງປັບປຸງບໍລິສັດຂອງຕົນ ໃຫ້ໄດ້ຕາມເງື່ອນໄຂທີ່ກຳນົດໃນມາດຕານີ້ ພາຍໃນກຳນົດເວລາ 1 ປີ ນັບແຕ່ວັນທີ່ດຳລັດສະບັບນີ້ ມີຜົນສັກສິດເປັນຕົ້ນໄປ. ຖ້າບໍ່ສາມາດປັບປຸງໄດ້ ແມ່ນໃຫ້ໂຈະ ຫຼື ຫັນເປັນທຸລະກິດນ້ຳມັນເຊື້ອໄຟອື່ນ.

**ມາດຕາ 15 ການນຳເຂົ້ານ້ຳມັນເຊື້ອໄຟ**

ການນຳເຂົ້ານ້ຳມັນເຊື້ອໄຟ ຕ້ອງແມ່ນບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວຖືກຕ້ອງຕາມເງື່ອນໄຂທີ່ກຳນົດໄວ້ໃນດຳລັດສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ເປັນຜູ້ນຳເຂົ້າ. ການນຳເຂົ້າແຕ່ລະຄັ້ງ ຕ້ອງມີໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຈາກປະເທດຕົ້ນທາງ, ໄດ້ມາດຕະຖານແຫ່ງຊາດ, ໄດ້ຮັບອະນຸຍາດນຳເຂົ້າ, ນຳເຂົ້າຜ່ານດ່ານສາກົນ ແລະ ດ່ຽນຖ່າຍລົງສາງນ້ຳມັນຂອງບໍລິສັດຕົນ ຫຼື ບໍລິສັດຈຳໜ່າຍພາຍໃນ ທີ່ເປັນລູກຄ້າຂອງຕົນ.

ການນຳເຂົ້ານ້ຳມັນເຊື້ອໄຟ ຕ້ອງສອດຄ່ອງກັບແຜນການຈຳໜ່າຍນ້ຳມັນເຊື້ອໄຟປະຈຳປີ ທີ່ຖືກຮັບຮອງໂດຍກະຊວງອຸດສາຫະກຳ ແລະ ການຄ້າ.

ການນຳເຂົ້ານ້ຳມັນເຊື້ອໄຟ ເພື່ອຮັບໃຊ້ໂຄງການທີ່ໄດ້ຮັບການຍົກເວັ້ນພາສີ, ອາກອນ ແລະ ພັນທະອື່ນ ຕ້ອງສອດຄ່ອງກັບກົດໝາຍ ຊຶ່ງໄດ້ຮັບການເຫັນດີຈາກສະພາແຫ່ງຊາດ ຕາມການສະເໜີຂອງລັດຖະບານ.

**ມາດຕາ 16 ການສ້າງແຜນການນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟປະຈຳປີ**

ບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ຕ້ອງສ້າງແຜນການນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟປະຈຳປີ ໂດຍຜ່ານການຢັ້ງຢືນຈາກສະມາຄົມນ້ຳມັນເຊື້ອໄຟ ສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ກ່ອນວັນທີ 31 ເດືອນຕຸລາ ຂອງແຕ່ລະປີ ເພື່ອພິຈາລະນາ.

ໃນກໍລະນີ ບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ຕ້ອງການນຳເຂົ້ານ້ຳມັນເຊື້ອໄຟເກີນແຜນ ທີ່ໄດ້ຮັບຮອງຕ້ອງໄດ້ສ້າງແຜນການເພີ່ມເຕີມ ໂດຍຊີ້ແຈງເຫດຜົນຈະແຈ້ງ, ຜ່ານການຢັ້ງຢືນຈາກສະມາຄົມນ້ຳມັນເຊື້ອໄຟ ແລະ ສົ່ງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ກ່ອນວັນນຳເຂົ້າ 60 ວັນ ເພື່ອພິຈາລະນາ.

ແຜນການນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟປະຈຳປີ ຂອງບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟໃດໜຶ່ງ ບໍ່ສາມາດມອບໂອນໃຫ້ບໍລິສັດອື່ນ.

**ມາດຕາ 17 ການສົ່ງອອກນ້ຳມັນເຊື້ອໄຟ**

ນ້ຳມັນເຊື້ອໄຟທີ່ສົ່ງອອກ ຕ້ອງມີໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ໄດ້ມາດຕະຖານແຫ່ງຊາດ, ໄດ້ຮັບອະນຸຍາດສົ່ງອອກ ແລະ ສົ່ງອອກຜ່ານດ່ານສາກົນ.

ຂັ້ນຕອນການອະນຸຍາດສົ່ງອອກນ້ຳມັນເຊື້ອໄຟ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 18 ການເຄື່ອນຍ້າຍນ້ຳມັນເຊື້ອໄຟຜ່ານແດນ**

ການເຄື່ອນຍ້າຍນ້ຳມັນເຊື້ອໄຟຜ່ານແດນ ແມ່ນການເຄື່ອນຍ້າຍນ້ຳມັນເຊື້ອໄຟຈາກປະເທດໃດໜຶ່ງຜ່ານແດນ ສປປ ລາວ ໄປຍັງປະເທດທີສາມ ໂດຍບໍ່ມີການເກັບມ້ຽນ ຫຼື ຖ່ຽນຖ່າຍ ຢູ່ ສປປ ລາວ.

ການເຄື່ອນຍ້າຍນ້ຳມັນເຊື້ອໄຟຜ່ານແດນ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ດຳເນີນໂດຍຜູ້ດຳເນີນທຸລະກິດໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ ລະຫວ່າງປະເທດ ແລະ ຜ່ານແດນ;
2. ມີສັນຍາບໍລິການຂົນສົ່ງ, ສັນຍາຊື້ຂາຍນ້ຳມັນເຊື້ອໄຟຕົ້ນທາງ ແລະ ປາຍທາງ;
3. ໄດ້ຮັບອະນຸຍາດຈາກກະຊວງອຸດສາຫະກຳ ແລະ ການຄ້າ;
4. ຈັດສົ່ງຕາມເສັ້ນທາງ, ເວລາທີ່ໄດ້ກຳນົດໄວ້ ແລະ ດ່ານເຂົ້າ-ອອກ ທີ່ເປັນດ່ານສາກົນເທົ່ານັ້ນ;
5. ຄົບຖ້ວນຕາມຈຳນວນ ແລະ ຢູ່ໃນສະພາບເດີມ ພາຍໃຕ້ການຕິດຕາມຂອງເຈົ້າໜ້າທີ່ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການການເງິນ;
6. ເສຍຄ່າທຳນຽມຜ່ານແດນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 3
## ການເຄື່ອນໄຫວທຸລະກິດຂອງບໍລິສັດຈຳໜ່າຍພາຍໃນ

**ມາດຕາ 19 ບໍລິສັດຈຳໜ່າຍພາຍໃນ**

ບໍລິສັດຈຳໜ່າຍພາຍໃນ ແມ່ນບໍລິສັດທີ່ເຄື່ອນໄຫວທຸລະກິດກ່ຽວກັບການຊື້ນ້ຳມັນເຊື້ອໄຟຈາກບໍລິສັດ ນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ, ຜູ້ຜະລິດ ແລະ ປຸງແຕ່ງຢູ່ພາຍໃນປະເທດ ເພື່ອຈຳໜ່າຍໃຫ້ປໍ້ານ້ຳມັນເຊື້ອໄຟ ແລະ ລູກຄ້າຂອງຕົນ.

**ມາດຕາ 20 ການຂໍອະນຸຍາດເຄື່ອນໄຫວທຸລະກິດຂອງບໍລິສັດຈໍາໜ່າຍພາຍໃນ**

ພາຍຫຼັງໄດ້ໃບທະບຽນວິສາຫະກິດ, ໃບຢັ້ງຢືນດ້ານສິ່ງແວດລ້ອມ ແລະ ສັງຄົມ, ໃບຢັ້ງຢືນຄວາມຖືກຕ້ອງການກໍ່ສ້າງສາງນໍ້າມັນເຊື້ອໄຟ ແລະ ສໍາເລັດຕາມເງື່ອນໄຂຕ່າງໆ ທີ່ກໍານົດໃນມາດຕາ 23 ຂອງດໍາລັດສະບັບນີ້ ໃຫ້ສະເໜີຕໍ່ກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອຂໍໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດຈໍາໜ່າຍພາຍໃນ, ພາຍຫຼັງໄດ້ຮັບໃບຢັ້ງຢືນແລ້ວ ຈຶ່ງສາມາດເຄື່ອນໄຫວທຸລະກິດ.

**ມາດຕາ 21 ເອກະສານປະກອບຂໍອະນຸຍາດເຄື່ອນໄຫວທຸລະກິດຂອງບໍລິສັດຈໍາໜ່າຍພາຍໃນ**

ການຂໍອະນຸຍາດເຄື່ອນໄຫວທຸລະກິດຂອງບໍລິສັດຈໍາໜ່າຍພາຍໃນ ຕ້ອງປະກອບເອກະສານຕາມທີ່ກໍານົດໄວ້ໃນມາດຕາ 12 ຂອງດໍາລັດສະບັບນີ້ ຍົກເວັ້ນ ຂໍ້ 8 ຂອງມາດຕາດັ່ງກ່າວ.

**ມາດຕາ 22 ການອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດຈໍາໜ່າຍພາຍໃນ**

ການອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດຈໍາໜ່າຍພາຍໃນ ໃຫ້ປະຕິບັດຄືກັນກັບການອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດນໍາເຂົ້າ ແລະ ສົ່ງອອກນໍ້າມັນເຊື້ອໄຟ ຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 13 ຂອງດໍາລັດສະບັບນີ້.

**ມາດຕາ 23 ເງື່ອນໄຂການເຄື່ອນໄຫວທຸລະກິດຂອງບໍລິສັດຈໍາໜ່າຍພາຍໃນ**

ການເຄື່ອນໄຫວທຸລະກິດຂອງບໍລິສັດຈໍາໜ່າຍພາຍໃນ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດຈໍາໜ່າຍພາຍໃນ;
2. ໄດ້ລົງທຶນ ແລະ ຖອກທຶນຈົດທະບຽນ ຕາມທີ່ກໍານົດໄວ້ໃນ ຂໍ້ 1.2 ມາດຕາ 7 ຂອງດໍາລັດສະບັບນີ້;
3. ຖືບັນຊີຖືກຕ້ອງຕາມກົດໝາຍ;
4. ມີບັນຊີເງິນຝາກຢູ່ທະນາຄານທີ່ຕັ້ງຢູ່ ສປປ ລາວ ແລະ ການຊື້-ຂາຍນໍ້າມັນເຊື້ອໄຟ ຕ້ອງຊໍາລະຜ່ານທະນາຄານ;
5. ມີສັນຍາຊື້-ຂາຍກັບບໍລິສັດນໍາເຂົ້າ ແລະ ສົ່ງອອກນໍ້າມັນເຊື້ອໄຟ ແລະ/ຫຼື ຜູ້ຜະລິດ ແລະ ປຸງແຕ່ງພາຍໃນ;
6. ມີນໍ້າມັນເຊື້ອໄຟແຮສໍາຮອງໄວ້ໃຊ້ໃນກໍລະນີສຸກເສີນ ໃຫ້ໄດ້ຢ່າງໜ້ອຍ ສິບວັນ ຕາມຕົວເລກສະເລ່ຍການສະໜອງປະຈໍາວັນຂອງປີຜ່ານມາ ເພື່ອສະໜອງໃຫ້ແກ່ປໍ້ານໍ້າມັນເຊື້ອໄຟ ແລະ ລູກຄ້າຂອງຕົນ;
7. ສາມາດສະໜອງ ແລະ ຈໍາໜ່າຍນໍ້າມັນເຊື້ອໄຟ ຫ້າສິບລ້ານ (50.000.000) ລິດ ຂຶ້ນໄປ ຕໍ່ປີ;
8. ມີເຄື່ອງໝາຍຂອງບໍລິສັດຕົນ ຊຶ່ງໄດ້ຈົດທະບຽນເຄື່ອງໝາຍຖືກຕ້ອງຕາມກົດໝາຍ;
9. ມີສາງເກັບນໍ້າມັນເຊື້ອໄຟ ເປັນຂອງຕົນເອງ ທີ່ຕິດເຄື່ອງໝາຍ ຂອງບໍລິສັດ, ສາມາດບັນຈຸນໍ້າມັນໄດ້ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ 2 ມາດຕາ 7 ຂອງດໍາລັດສະບັບນີ້;
10. ມີພາຫະນະຂົນສົ່ງນໍ້າມັນເຊື້ອໄຟ ທີ່ເປັນຂອງບໍລິສັດ ຫຼື ໃນກຸ່ມບໍລິສັດ ຢ່າງໜ້ອຍ 10 ຄັນ; ພາຫະນະຂົນສົ່ງແຕ່ລະຄັນ ຕ້ອງໄດ້ມາດຕະຖານເຕັກນິກ, ຂຶ້ນທະບຽນ ແລະ ສອບທຽບ ຕາມການກໍານົດຂອງຂະແໜງການທີ່ກ່ຽວຂ້ອງ, ຕ້ອງມີເຄື່ອງໝາຍ ແລະ ສີ ທີ່ເປັນສັນຍາລັກຂອງບໍລິສັດຕົນ ຫຼື ຂອງບໍລິສັດນໍາເຂົ້າ ແລະ ສົ່ງອອກ ນໍ້າມັນເຊື້ອໄຟທີ່ຕົນເອງເປັນຕົວແທນ;
11. ມີປໍ້າບໍລິສັດລົງທຶນເອງ ແລະ ປໍ້າຕົວແທນ ຕາມການກໍານົດຂອງອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ;
12. ມີເຄື່ອງກວດກາຄຸນນະພາບ ແລະ ເຄື່ອງຊັ່ງຜອງນໍ້າມັນເຊື້ອໄຟ ທີ່ໄດ້ມາດຕະຖານ ຕາມການກໍານົດຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ;
13. ມີພະນັກງານ ຢ່າງໜ້ອຍ ສອງຄົນ ທີ່ມີໃບຢັ້ງຢືນຜ່ານການຝຶກອົບຮົມ ກ່ຽວກັບ ທຸລະກິດນໍ້າມັນເຊື້ອໄຟ ອອກໃຫ້ໂດຍອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ;
14. ມີປະກັນໄພ ຕາມກົດໝາຍວ່າດ້ວຍການປະກັນໄພ.

## ໝວດທີ 4
## ການເຄື່ອນໄຫວທຸລະກິດຂອງປ້ຳນ້ຳມັນເຊື້ອໄຟ

**ມາດຕາ 24 ປ້ຳນ້ຳມັນເຊື້ອໄຟ**

ປ້ຳນ້ຳມັນເຊື້ອໄຟ ແມ່ນ ຫົວໜ່ວຍທຸລະກິດຂາຍຍ່ອຍນ້ຳມັນເຊື້ອໄຟ ເພື່ອຈຳໜ່າຍໃຫ້ຜູ້ຊົມໃຊ້ໂດຍກົງ ຊຶ່ງປະກອບມີປ້ຳບໍລິສັດລົງທຶນເອງ ແລະ ປ້ຳຕົວແທນ.

**ມາດຕາ 25 ການຂໍອະນຸຍາດເຄື່ອນໄຫວທຸລະກິດຂອງປ້ຳນ້ຳມັນເຊື້ອໄຟ**

ພາຍຫຼັງໄດ້ໃບທະບຽນວິສາຫະກິດ, ໃບຢັ້ງຢືນດ້ານສິ່ງແວດລ້ອມ ແລະ ສັງຄົມ, ໃບຢັ້ງຢືນຄວາມຖືກຕ້ອງການກໍ່ສ້າງປ້ຳນ້ຳມັນເຊື້ອໄຟ ແລະ ສຳເລັດຕາມເງື່ອນໄຂຕ່າງໆ ທີ່ກຳນົດໃນມາດຕາ 28 ຂອງດຳລັດສະບັບນີ້ ໃຫ້ສະເໜີຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອຂໍໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງປ້ຳນ້ຳມັນເຊື້ອໄຟ, ພາຍຫຼັງໄດ້ຮັບໃບຢັ້ງຢືນແລ້ວ ຈຶ່ງສາມາດເຄື່ອນໄຫວທຸລະກິດ.

**ມາດຕາ 26 ເອກະສານປະກອບຂໍອະນຸຍາດເຄື່ອນໄຫວທຸລະກິດຂອງປ້ຳນ້ຳມັນເຊື້ອໄຟ**

ການຂໍອະນຸຍາດເຄື່ອນໄຫວທຸລະກິດຂອງປ້ຳນ້ຳມັນເຊື້ອໄຟ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມທີ່ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດ;
2. ໃບທະບຽນວິສາຫະກິດ;
3. ໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ;
4. ໃບອະນຸຍາດປຸກສ້າງຊົ່ວຄາວ ແລະ ໃບຢັ້ງຢືນຄວາມຖືກຕ້ອງຂອງການກໍ່ສ້າງປ້ຳນ້ຳມັນເຊື້ອໄຟ;
5. ໃບຢັ້ງຢືນດ້ານສິ່ງແວດລ້ອມ ແລະ ສັງຄົມ ກ່ຽວກັບ ປ້ຳນ້ຳມັນເຊື້ອໄຟ;
6. ໃບຢັ້ງຢືນການກວດຜ່ານກ່ຽວກັບຄວາມປອດໄພທາງດ້ານອັກຄີໄພຂອງປ້ຳນ້ຳມັນເຊື້ອໄຟ;
7. ບັນຊີຊັບສິນຂອງປ້ຳນ້ຳມັນເຊື້ອໄຟ;
8. ເອກະສານຢັ້ງຢືນຖານະການເງິນຈາກທະນາຄານ;
9. ໃບທະບຽນວິສາຫະກິດຂອງບໍລິສັດນຳເຂົ້າ ແລະ ສົ່ງອອກ ຫຼື ບໍລິສັດຈຳໜ່າຍພາຍໃນ, ມະຕິ ຕົກລົງສ້າງຕັ້ງ ແລະ ໃບມອບສິດ ສຳລັບປ້ຳບໍລິສັດລົງທຶນເອງ;
10. ໃບຢັ້ງຢືນການເປັນຕົວແທນ ແລະ ສັນຍາຊື້-ຂາຍນ້ຳມັນເຊື້ອໄຟ ສຳລັບປ້ຳຕົວແທນ;
11. ບັນຊີເງິນຝາກຢູ່ທະນາຄານ ທີ່ຕັ້ງຢູ່ ສປປ ລາວ.

**ມາດຕາ 27 ການອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງປ້ຳນ້ຳມັນເຊື້ອໄຟ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ກຳນົດໃນມາດຕາ 26 ຂອງດຳລັດສະບັບນີ້ ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງລົງກວດກາ ພາຍໃນ ຫ້າວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານເປັນຕົ້ນໄປ ໂດຍມີການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

ຖ້າເຫັນວ່າຄຳຮ້ອງ ແລະ ເອກະສານປະກອບ ຫາກມີເນື້ອໃນບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ ພາຍໃນ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ເພື່ອໃຫ້ຜູ້ຮ້ອງຂໍແກ້ໄຂໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

ໃນກໍລະນີ ບໍ່ສາມາດອອກໃບຢັ້ງຢືນໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ ພາຍໃນ ສິບຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ເປັນຕົ້ນໄປ.

ຖ້າເຫັນວ່າເອກະສານຫາກຄົບຖ້ວນ, ຖືກຕ້ອງ ແລະ ໄດ້ຜ່ານການກວດກາແລ້ວ ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດປໍ້ານໍ້າມັນເຊື້ອໄຟ ພາຍໃນ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ເປັນຕົ້ນໄປ.

ໃບຢັ້ງຢືນການເຄື່ອນໄຫວທຸລະກິດປໍ້ານໍ້າມັນເຊື້ອໄຟ ມີອາຍຸນຳໃຊ້ ສອງປີ ແລະ ສາມາດຕໍ່ໄດ້.

### ມາດຕາ 28 ເງື່ອນໄຂການເຄື່ອນໄຫວທຸລະກິດຂອງປໍ້ານໍ້າມັນເຊື້ອໄຟ

ການເຄື່ອນໄຫວທຸລະກິດຂອງປໍ້ານໍ້າມັນເຊື້ອໄຟ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງປໍ້ານໍ້າມັນເຊື້ອໄຟ;
2. ໄດ້ລົງທຶນ ແລະ ຖອກທຶນຈົດທະບຽນ ຕາມທີ່ກຳນົດໄວ້ໃນ ຂໍ້ 1.3 ມາດຕາ 7 ຂອງດຳລັດສະບັບນີ້;
3. ມີລະບົບບັນຊີຕິດຕາມການຮັບ ແລະ ການຈ່າຍນໍ້າມັນເຊື້ອໄຟ ປະຈຳວັນ;
4. ມີລະບົບການຕິດຕາມ-ກວດນັບຕົວເລກການຈຳໜ່າຍນໍ້າມັນເຊື້ອໄຟ;
5. ມີເຄື່ອງໝາຍຂອງບໍລິສັດທີ່ຕົນເປັນຕົວແທນຈຳໜ່າຍ;
6. ມີບັນຊີເງິນຝາກຢູ່ທະນາຄານທີ່ຕັ້ງຢູ່ ສປປ ລາວ ແລະ ການຊື້ຂາຍນໍ້າມັນເຊື້ອໄຟ ຕ້ອງຊຳລະຜ່ານທະນາຄານ;
7. ມີຫົວປໍ້າ ແລະ ເຄື່ອງກວດກາບໍລິມາດ ທີ່ໄດ້ຜ່ານການກວດກາ ແລະ ຢັ້ງຢືນມາດຕະຖານ ຈາກຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ;
8. ມີບັ້ງມອດໄຟ ຕາມຈຳນວນຫົວປໍ້າ ພ້ອມດ້ວຍອຸປະກອນມອດໄຟຂັ້ນພື້ນຖານ;
9. ມີຖັງເກັບນໍ້າມັນ ທີ່ບັນຈຸໄດ້ ສູງສຸດບໍ່ໃຫ້ເກີນ ແປດໝື່ນ (80.000) ລິດ ຕໍ່ໜຶ່ງປໍ້າ;
10. ມີຫ້ອງນໍ້າສາທາລະນະ;
11. ຖ້າມີການດຳເນີນກິດຈະການອື່ນຢູ່ປໍ້ານໍ້າມັນເຊື້ອໄຟ ເປັນຕົ້ນ ຮ້ານສະດວກຊື້, ຮ້ານອາຫານ, ຮ້ານຂາຍເຄື່ອງດື່ມ ຕ້ອງຂຶ້ນທະບຽນວິສາຫະກິດສະເພາະຂອງແຕ່ລະກິດຈະການ;
12. ມີປະກັນໄພ ຕາມກົດໝາຍວ່າດ້ວຍການປະກັນໄພ.

ສຳລັບປໍ້ານໍ້າມັນເຊື້ອໄຟ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວ ກ່ອນດຳລັດສະບັບນີ້ ຕ້ອງປັບປຸງເງື່ອນໄຂ ໃຫ້ສອດຄ່ອງກັບບົດບັນຍັດຂອງມາດຕານີ້ ພາຍໃນກຳນົດເວລາ ສອງປີ ນັບແຕ່ວັນທີ່ດຳລັດສະບັບນີ້ມີຜົນສັກສິດເປັນຕົ້ນໄປ, ຖ້າກາຍສອງປີຍັງບໍ່ສາມາດປັບປຸງສຳເລັດ ແມ່ນໃຫ້ໂຈະການເຄື່ອນໄຫວ ແລະ ຮື້ຖອນປໍ້າດັ່ງກ່າວ.

## ໝວດທີ 5
## ການເຄື່ອນໄຫວທຸລະກິດຂອງບໍລິສັດໃຫ້ບໍລິການກ່ຽວກັບນໍ້າມັນເຊື້ອໄຟ

### ມາດຕາ 29 ບໍລິສັດໃຫ້ບໍລິການກ່ຽວກັບນໍ້າມັນເຊື້ອໄຟ

ບໍລິສັດໃຫ້ບໍລິການກ່ຽວກັບນໍ້າມັນເຊື້ອໄຟ ແມ່ນຫົວໜ່ວຍທຸລະກິດທີ່ໃຫ້ບໍລິການກ່ຽວກັບການເຊົ່າສາງ, ການເຊົ່າພາຫະນະຂົນສົ່ງ, ຂົນສົ່ງ ນໍ້າມັນເຊື້ອໄຟ.

### ມາດຕາ 30 ການຂໍອະນຸຍາດເຄື່ອນໄຫວທຸລະກິດຂອງບໍລິສັດໃຫ້ເຊົ່າສາງນໍ້າມັນເຊື້ອໄຟ

ພາຍຫຼັງໄດ້ໃບທະບຽນວິສາຫະກິດ, ໃບຢັ້ງຢືນດ້ານສິ່ງແວດລ້ອມ, ໃບຢັ້ງຢືນຄວາມຖືກຕ້ອງການກໍ່ສ້າງສາງນໍ້າມັນເຊື້ອໄຟ ແລະ ສຳເລັດຕາມເງື່ອນໄຂຕ່າງໆ ທີ່ກຳນົດໃນມາດຕາ 33 ຂອງດຳລັດສະບັບນີ້ ໃຫ້ສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຂໍໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດໃຫ້ເຊົ່າສາງນໍ້າມັນເຊື້ອໄຟ, ພາຍຫຼັງໄດ້ຮັບໃບຢັ້ງຢືນແລ້ວ ຈຶ່ງສາມາດເຄື່ອນໄຫວທຸລະກິດ.

**ມາດຕາ 31 ເອກະສານປະກອບຂໍອະນຸຍາດເຄື່ອນໄຫວທຸລະກິດຂອງບໍລິສັດໃຫ້ເຊົ່າສາງນ້ຳມັນເຊື້ອໄຟ**

ເອກະສານປະກອບການຂໍອະນຸຍາດເຄື່ອນໄຫວທຸລະກິດ ຂອງບໍລິສັດໃຫ້ເຊົ່າສາງນ້ຳມັນເຊື້ອໄຟ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 12 ຂອງດຳລັດສະບັບນີ້ ຍົກເວັ້ນຂໍ້ 7 ແລະ ຂໍ້ 8, ສຳລັບຂໍ້ 11 ໃຫ້ມີແຕ່ບັນຊີສາງເກັບນ້ຳມັນເຊື້ອໄຟ.

**ມາດຕາ 32 ການອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດ ຂອງບໍລິສັດໃຫ້ເຊົ່າສາງນ້ຳມັນເຊື້ອໄຟ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 31 ຂອງດຳລັດສະບັບນີ້, ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງລົງກວດກາ ພາຍໃນຫ້າວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານເປັນຕົ້ນໄປ ໂດຍມີການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

ຖ້າເຫັນວ່າຄຳຮ້ອງ ແລະ ເອກະສານປະກອບ ຫາກມີເນື້ອໃນບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ ພາຍໃນ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ເພື່ອໃຫ້ຜູ້ຮ້ອງຂໍແກ້ໄຂໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

ໃນກໍລະນີ ບໍ່ສາມາດອອກໃບຢັ້ງຢືນໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ ພາຍໃນ ສິບຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ເປັນຕົ້ນໄປ.

ຖ້າເຫັນວ່າເອກະສານຫາກຄົບຖ້ວນ, ຖືກຕ້ອງ ແລະ ໄດ້ຜ່ານການກວດກາແລ້ວ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດໃຫ້ເຊົ່າສາງນ້ຳມັນເຊື້ອໄຟ ພາຍໃນ ຊາວວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ເປັນຕົ້ນໄປ.

ໃບຢັ້ງຢືນການເຄື່ອນໄຫວທຸລະກິດໃຫ້ເຊົ່າສາງນ້ຳມັນເຊື້ອໄຟ ມີອາຍຸນຳໃຊ້ ສາມປີ ແລະ ສາມາດຕໍ່ໄດ້.

**ມາດຕາ 33 ເງື່ອນໄຂການເຄື່ອນໄຫວທຸລະກິດ ຂອງບໍລິສັດໃຫ້ເຊົ່າສາງນ້ຳມັນເຊື້ອໄຟ**

ການເຄື່ອນໄຫວທຸລະກິດຂອງບໍລິສັດໃຫ້ເຊົ່າສາງນ້ຳມັນເຊື້ອໄຟ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດໃຫ້ເຊົ່າສາງນ້ຳມັນເຊື້ອໄຟ;
2. ໄດ້ລົງທຶນ ແລະ ຖອກທຶນຈົດທະບຽນຕາມທີ່ກຳນົດໄວ້ໃນ ຂໍ້ 1.4 ມາດຕາ 7 ຂອງດຳລັດສະບັບນີ້;
3. ຖືບັນຊີຖືກຕ້ອງຕາມກົດໝາຍ;
4. ມີສາງເກັບນ້ຳມັນເຊື້ອໄຟເປັນຂອງຕົນເອງ ທີ່ຖືກຕ້ອງຕາມເຕັກນິກຂອງການປຸກສ້າງສາງ ສາມາດບັນຈຸນ້ຳມັນໄດ້ແຕ່ ຫ້າແສນ (500.000) ລິດ ຂຶ້ນໄປ;
5. ມີພະນັກງານທີ່ມີປະສົບການ ຫຼື ມີໃບຢັ້ງຢືນຜ່ານການຝຶກອົບຮົມກ່ຽວກັບການຮັກສາຄວາມປອດໄພສາງນ້ຳມັນເຊື້ອໄຟ ຢ່າງໜ້ອຍ ໜຶ່ງຄົນຕໍ່ໜຶ່ງສາງ.
6. ມີປະກັນໄພ ຕາມກົດໝາຍວ່າດ້ວຍການປະກັນໄພ.

**ມາດຕາ 34 ການຂໍອະນຸຍາດເຄື່ອນໄຫວທຸລະກິດຂອງບໍລິສັດໃຫ້ເຊົ່າພາຫະນະຂົນສົ່ງນ້ຳມັນເຊື້ອໄຟ**

ພາຍຫຼັງໄດ້ໃບທະບຽນວິສາຫະກິດ ແລະ ສຳເລັດຕາມເງື່ອນໄຂຕ່າງໆ ຕາມທີ່ຂະແໜງໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ໄດ້ກຳນົດ ໃຫ້ນຳສະເໜີຕໍ່ຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອຂໍໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດໃຫ້ເຊົ່າພາຫະນະຂົນສົ່ງນ້ຳມັນເຊື້ອໄຟ, ພາຍຫຼັງໄດ້ຮັບໃບຢັ້ງຢືນແລ້ວ ຈຶ່ງສາມາດເຄື່ອນໄຫວທຸລະກິດ.

ມາດຕາ 35 ການຂໍອະນຸຍາດເຄື່ອນໄຫວທຸລະກິດຂອງບໍລິສັດໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ

ພາຍຫຼັງໄດ້ໃບທະບຽນວິສາຫະກິດ ແລະ ສຳເລັດຕາມເງື່ອນໄຂຕ່າງໆ ຕາມທີ່ຂະແໜງໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ໄດ້ກຳນົດ ໃຫ້ນຳສະເໜີຕໍ່ຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອຂໍໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ, ພາຍຫຼັງໄດ້ຮັບໃບຢັ້ງຢືນແລ້ວ ຈຶ່ງສາມາດເຄື່ອນໄຫວທຸລະກິດ.

## ພາກທີ III

## ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດນ້ຳມັນເຊື້ອໄຟ

## ໝວດທີ 1

## ສິດ ແລະ ພັນທະຂອງບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ

ມາດຕາ 36 ສິດຂອງບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ

ບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ມີສິດ ດັ່ງນີ້:

1. ນຳເຂົ້າ ແລະ ສົ່ງອອກ, ສະໜອງ ນ້ຳມັນເຊື້ອໄຟ ໃຫ້ແກ່ບໍລິສັດຈຳໜ່າຍພາຍໃນ ແລະ ລູກຄ້າຂອງຕົນ;
2. ຊື້ນ້ຳມັນເຊື້ອໄຟຈາກຜູ້ຜະລິດ ແລະ ປຸງແຕ່ງຢູ່ພາຍໃນ;
3. ໃຊ້ບໍລິການທຸລະກິດໃຫ້ບໍລິການ ກ່ຽວກັບ ນ້ຳມັນເຊື້ອໄຟ;
4. ຂຶ້ນແຜນການນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟປະຈຳປີ ສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາ ໂດຍຜ່ານການຢັ້ງຢືນຈາກສະມາຄົມນ້ຳມັນເຊື້ອໄຟ;
5. ໄດ້ຮັບການຝຶກອົບຮົມກ່ຽວກັບເຕັກນິກການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ;
6. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນໃນການດຳເນີນທຸລະກິດນ້ຳມັນເຊື້ອໄຟ;
7. ນຳໃຊ້ສິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 37 ພັນທະຂອງບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ

ບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ມີພັນທະ ດັ່ງນີ້:

1. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ;
2. ສະໜອງນ້ຳມັນເຊື້ອໄຟໃຫ້ແກ່ບໍລິສັດຈຳໜ່າຍພາຍໃນ ຢ່າງເປັນປົກກະຕິ;
3. ຮັບປະກັນທາງດ້ານຄຸນນະພາບ ແລະ ປະລິມານ ນ້ຳມັນເຊື້ອໄຟ ທີ່ຕົນສະໜອງໃຫ້ບໍລິສັດຈຳໜ່າຍພາຍໃນ ແລະ ລູກຄ້າຂອງຕົນ;
4. ມີນ້ຳມັນເຊື້ອໄຟແຮສຳຮອງໄວ້ໃຊ້ໃນກໍລະນີສຸກເສີນຕາມເງື່ອນໄຂທີ່ກຳນົດໄວ້ ໃນຂໍ້ 5 ມາດຕາ 14 ຂອງດຳລັດສະບັບນີ້;
5. ປະຕິບັດລາຄາຂາຍຍົກ ຕາມອີງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ກຳນົດ ໃນແຕ່ລະໄລຍະ;
6. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການກວດກາການເຄື່ອນໄຫວທຸລະກິດນ້ຳມັນເຊື້ອໄຟຂອງຕົນ;
7. ເສຍພາສີ, ອາກອນ ແລະ ພັນທະອື່ນ ໃຫ້ລັດ ຕາມກົດໝາຍ;
8. ລາຍງານການນຳເຂົ້າ, ການຈຳໜ່າຍ ແລະ ນ້ຳມັນເຊື້ອໄຟຄ້າງສາງ ປະຈຳເດືອນ, ງວດ ແລະ ປີ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງການເງິນ;
9. ລາຍງານລາຄານຳເຂົ້າຕົວຈິງ (CIF) ປະຈຳອາທິດ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ;

10. ສະຫຼຸບບັນຊີການເງິນປະຈຳປີ ໂດຍມີການຢັ້ງຢືນຈາກອົງກອນກວດສອບຂອງລັດ ຫຼື ບໍລິສັດກວດສອບບັນຊີທີ່ຈົດທະບຽນຖືກຕ້ອງຕາມກົດໝາຍ ລາຍງານໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງການເງິນ;
11. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2

### ສິດ ແລະ ພັນທະຂອງບໍລິສັດຈຳໜ່າຍພາຍໃນ

**ມາດຕາ 38 ສິດຂອງບໍລິສັດຈຳໜ່າຍພາຍໃນ**

ບໍລິສັດຈຳໜ່າຍພາຍໃນ ມີສິດ ດັ່ງນີ້:

1. ຊື້ນ້ຳມັນເຊື້ອໄຟ ຈາກບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ຫຼື ຜູ້ຜະລິດ ແລະ ປຸງແຕ່ງຢູ່ພາຍໃນ ເພື່ອສະໜອງນ້ຳມັນເຊື້ອໄຟ ໃຫ້ປ້ຳນ້ຳມັນເຊື້ອໄຟ ແລະ ລູກຄ້າຂອງຕົນ;
2. ມີປ້ຳບໍລິສັດລົງທຶນເອງ ແລະ ປ້ຳຕົວແທນ;
3. ໃຊ້ບໍລິການທຸລະກິດໃຫ້ບໍລິການ ກ່ຽວກັບ ນ້ຳມັນເຊື້ອໄຟ;
4. ອອກລະບຽບການກ່ຽວກັບການຄຸ້ມຄອງປ້ຳບໍລິສັດລົງທຶນເອງ ແລະ ປ້ຳຕົວແທນ ໃຫ້ສອດຄ່ອງ ຕາມດຳລັດສະບັບນີ້ ແລະ ກົດໝາຍທີ່ກ່ຽວຂ້ອງ;
5. ກວດກາດ້ານເຕັກນິກ ແລະ ໃຫ້ຄຳແນະນຳດ້ານວິຊາການ ແກ່ປ້ຳບໍລິສັດລົງທຶນເອງ ແລະ ປ້ຳຕົວແທນ ເພື່ອຮັບປະກັນຄຸນນະພາບ, ປະລິມານຂອງນ້ຳມັນເຊື້ອໄຟ ແລະ ສະພາບແວດລ້ອມ;
6. ຄຸ້ມຄອງ ແລະ ຕິດຕາມ ການເຄື່ອນໄຫວຂອງປ້ຳບໍລິສັດລົງທຶນເອງ ແລະ ປ້ຳຕົວແທນ ໃນການປະຕິບັດລາຄາຂາຍຍ່ອຍ ແລະ ເວລາເປີດ-ປິດຂອງປ້ຳ ຕາມການກຳນົດຂອງອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ໃນແຕ່ລະໄລຍະ;
7. ຂຶ້ນແຜນການຈຳໜ່າຍນ້ຳມັນເຊື້ອໄຟປະຈຳປີ ລາຍງານຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ;
8. ໄດ້ຮັບການຝຶກອົບຮົມກ່ຽວກັບເຕັກນິກການຄຸ້ມຄອງປ້ຳນ້ຳມັນເຊື້ອໄຟ;
9. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນໃນການດຳເນີນທຸລະກິດນ້ຳມັນເຊື້ອໄຟ;
10. ນຳໃຊ້ສິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 39 ພັນທະຂອງບໍລິສັດຈຳໜ່າຍພາຍໃນ**

ບໍລິສັດຈຳໜ່າຍພາຍໃນ ມີພັນທະ ດັ່ງນີ້:

1. ຖືບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ;
2. ສະໜອງນ້ຳມັນເຊື້ອໄຟໃຫ້ແກ່ປ້ຳບໍລິສັດລົງທຶນເອງ ແລະ ປ້ຳຕົວແທນຂອງຕົນ ຢ່າງເປັນປົກກະຕິ;
3. ຮັບປະກັນດ້ານຄຸນນະພາບ ແລະ ປະລິມານ ນ້ຳມັນເຊື້ອໄຟ ທີ່ຕົນສະໜອງໃຫ້ ປ້ຳບໍລິສັດລົງທຶນເອງ ແລະ ປ້ຳຕົວແທນຂອງຕົນ;
4. ມີນ້ຳມັນເຊື້ອໄຟແຮສຳຮອງໄວ້ໃຊ້ໃນກໍລະນີສຸກເສີນຕາມເງື່ອນໄຂທີ່ກຳນົດໄວ້ ໃນຂໍ້ 6 ມາດຕາ 23 ຂອງ ດຳລັດສະບັບນີ້;
5. ປະຕິບັດລາຄາຂາຍຕາມອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟກຳນົດ ແລະ ແຈ້ງໃຫ້ປ້ຳບໍລິສັດລົງທຶນເອງ ແລະ ປ້ຳຕົວແທນຈຳໜ່າຍຂອງຕົນ ປະຕິບັດ;

6. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການກວດກາການເຄື່ອນໄຫວທຸລະກິດນໍ້າມັນເຊື້ອໄຟຂອງຕົນ;
7. ເສຍພາສີ, ອາກອນ ແລະ ພັນທະອື່ນ ໃຫ້ລັດ ຕາມກົດໝາຍ;
8. ລາຍງານການຈຳໜ່າຍ ແລະ ນໍ້າມັນເຊື້ອໄຟຄ້າງສາງ ປະຈຳເດືອນ, ງວດ ແລະ ປີ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງການເງິນ;
9. ສະຫຼຸບບັນຊີການເງິນປະຈຳປີ ໂດຍມີການຢັ້ງຢືນຈາກ ອົງກອນກວດສອບຂອງລັດ ຫຼື ບໍລິສັດກວດສອບບັນຊີ ທີ່ຈົດທະບຽນຖືກຕ້ອງຕາມກົດໝາຍ ລາຍງານໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງການເງິນ;
10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ສິດ ແລະ ພັນທະຂອງປໍ້ານໍ້າມັນເຊື້ອໄຟ

### ມາດຕາ 40 ສິດຂອງປໍ້ານໍ້າມັນເຊື້ອໄຟ

ປໍ້ານໍ້າມັນເຊື້ອໄຟ ມີສິດ ດັ່ງນີ້:

1. ດຳເນີນທຸລະກິດ ຕາມທີ່ໄດ້ຮັບອະນຸຍາດ;
2. ໄດ້ຮັບການສະໜອງນໍ້າມັນເຊື້ອໄຟ ຈາກບໍລິສັດຈຳໜ່າຍພາຍໃນ ທີ່ຕົນເປັນຕົວແທນ;
3. ໃຫ້ບໍລິການບ່ອນລ້າງອັດສີດ, ປ່ຽນຖ່າຍນໍ້າມັນເຄື່ອງ ແລະ ການບໍລິການອື່ນ ຕາມການອະນຸຍາດຂອງ ຂະແໜງການກ່ຽວຂ້ອງ;
4. ປະຕິເສດການຮັບເອົານໍ້າມັນເຊື້ອໄຟທີ່ບໍ່ໄດ້ຄຸນນະພາບ ຈາກບໍລິສັດຈຳໜ່າຍພາຍໃນ ທີ່ຕົນເປັນຕົວແທນ;
5. ໄດ້ຮັບການຝຶກອົບຮົມກ່ຽວກັບເຕັກນິກ ແລະ ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບ ທຸລະກິດປໍ້ານໍ້າມັນ ເຊື້ອໄຟ;
6. ນຳໃຊ້ສິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 41 ພັນທະຂອງປໍ້ານໍ້າມັນເຊື້ອໄຟ

ປໍ້ານໍ້າມັນເຊື້ອໄຟ ມີພັນທະ ດັ່ງນີ້:

1. ຖືບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ;
2. ຈຳໜ່າຍນໍ້າມັນເຊື້ອໄຟທີ່ມີຄຸນນະພາບ ແລະ ຮັບປະກັນດ້ານປະລິມານ ຕາມມາດຕະຖານທີ່ຂະແໜງການກ່ຽວຂ້ອງກຳນົດ;
3. ຕິດປ້າຍສະແດງລາຄາຂາຍຍ່ອຍນໍ້າມັນເຊື້ອໄຟ ຢູ່ທາງໜ້າຂອງປໍ້າ ແລະ ບ່ອນທີ່ສາມາດເຫັນໄດ້ງ່າຍ ໃນໄລຍະໜຶ່ງຮ້ອຍແມັດ ຂຶ້ນໄປ;
4. ຕິດລາຄາຂາຍຍ່ອຍນໍ້າມັນເຊື້ອໄຟໃສ່ຫົວປໍ້າ ຕາມການດັດປັບລາຄາໃນແຕ່ລະຄັ້ງ;
5. ຂາຍນໍ້າມັນເຊື້ອໄຟ ຕາມລາຄາທີ່ອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ກຳນົດແຕ່ລະໄລຍະ;
6. ແຈ້ງໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ, ນະຄອນ ແລະ ຕິດປ້າຍໃຫ້ຜູ້ຊົມໃຊ້ຊາບກ່ອນ 3 ວັນ ໃນກໍລະນີມີການປິດ ຫຼື ຢຸດກິດຈະການຊົ່ວຄາວ;
7. ມີນໍ້າມັນແຮສຳຮອງໄວ້ໃນກໍລະນີສຸກເສີນ ໃຫ້ໄດ້ຢ່າງໜ້ອຍ ສາມວັນ ຕາມຕົວເລກສະເລ່ຍການສະໜອງປະຈຳວັນຂອງປີຜ່ານມາ;

8. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ, ບໍລິສັດຈຳໜ່າຍພາຍໃນ ກ່ຽວກັບ ການສະໜອງຂໍ້ມູນ ແລະ ການກວດກາການດຳເນີນທຸລະກິດປໍ້ານໍ້າມັນເຊື້ອໄຟຂອງຕົນ;
9. ເສຍອາກອນ ແລະ ພັນທະອື່ນ ໃຫ້ລັດຕາມກົດໝາຍ;
10. ລາຍງານການຮັບເຂົ້າ, ການຈຳໜ່າຍ ແລະ ນໍ້າມັນເຊື້ອໄຟຄ້າງຖັງ ປະຈຳເດືອນ, ງວດ ແລະ ປີ ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການການເງິນ;
11. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 4
## ສິດ ແລະ ພັນທະຂອງບໍລິສັດໃຫ້ບໍລິການກ່ຽວກັບນໍ້າມັນເຊື້ອໄຟ

**ມາດຕາ 42 ສິດຂອງບໍລິສັດໃຫ້ບໍລິການກ່ຽວກັບນໍ້າມັນເຊື້ອໄຟ**

ບໍລິສັດໃຫ້ບໍລິການກ່ຽວກັບນໍ້າມັນເຊື້ອໄຟ ມີສິດ ດັ່ງນີ້ :

1. ດຳເນີນທຸລະກິດ ຕາມທີ່ໄດ້ຮັບອະນຸຍາດ;
2. ໄດ້ຮັບການຝຶກອົບຮົມ ກ່ຽວກັບ ເຕັກນິກ ແລະ ໄດ້ຮັບຂໍ້ມູນຂ່າວສານກ່ຽວກັບທຸລະກິດນໍ້າມັນເຊື້ອໄຟ;
3. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 43 ພັນທະຂອງບໍລິສັດໃຫ້ບໍລິການກ່ຽວກັບນໍ້າມັນເຊື້ອໄຟ**

ບໍລິສັດໃຫ້ບໍລິການກ່ຽວກັບນໍ້າມັນເຊື້ອໄຟ ມີພັນທະ ດັ່ງນີ້:

1. ຖືບັນຊີຖືກຕ້ອງຕາມກົດໝາຍວ່າດ້ວຍການບັນຊີ;
2. ແຈ້ງໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ຊາບ ກ່ຽວກັບ ການເຊັນສັນຍາໃຫ້ບໍລິການເຊົ່າສາງ, ເຊົ່າພາຫະນະ ຫຼື ຂົນສົ່ງນໍ້າມັນເຊື້ອໄຟ;
3. ສ້າງລະບົບການຄຸ້ມຄອງ ແລະ ນຳໃຊ້ສາງ, ພາຫະນະຂົນສົ່ງ ໃຫ້ມີປະສິດທິຜົນ;
4. ມີລະບົບປ້ອງກັນຄວາມປອດໄພ ແລະ ຮັກສາສິ່ງແວດລ້ອມ;
5. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການກວດກາການດຳເນີນທຸລະກິດຂອງຕົນ;
6. ເສຍອາກອນ ແລະ ພັນທະອື່ນ ໃຫ້ລັດຕາມກົດໝາຍ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ.

## ພາກທີ IV
## ການຄຸ້ມຄອງລາຄານໍ້າມັນເຊື້ອໄຟ

**ມາດຕາ 44 ຫຼັກການກຳນົດໂຄງປະກອບລາຄານໍ້າມັນເຊື້ອໄຟ**

ການກຳນົດໂຄງປະກອບລາຄານໍ້າມັນເຊື້ອໄຟ ປະຕິບັດຕາມຫຼັກການ ດັ່ງນີ້:

1. ກຳນົດຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງດັດສົມຂອງລັດ;
2. ປະຕິບັດຕາມນະໂຍບາຍຂອງລັດຖະບານ ກ່ຽວກັບການດັດສົມລາຄານໍ້າມັນເຊື້ອໄຟ ໃນແຕ່ລະໄລຍະ;
3. ລັດຖະບານ ເປັນຜູ້ກຳນົດໂຄງປະກອບລາຄານໍ້າມັນເຊື້ອໄຟ ຕາມການຄົ້ນຄວ້າ ສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ ໂດຍມີການປະສານສົມທົບ ກັບກະຊວງການເງິນ ແລະ ສະມາຄົມນໍ້າມັນເຊື້ອໄຟ.

**ມາດຕາ 45 ການກຳນົດລາຄານ້ຳມັນເຊື້ອໄຟ**

ການກຳນົດລາຄານ້ຳມັນເຊື້ອໄຟ ປະຕິບັດຕາມຫຼັກການ ດັ່ງນີ້ :

1. ການກຳນົດໂຄງປະກອບລາຄານ້ຳມັນເຊື້ອໄຟຂອງລັດຖະບານ ໃນແຕ່ລະໄລຍະ;
2. ສະພາບລາຄານ້ຳມັນເຊື້ອໄຟຕະຫຼາດໂລກໃນແຕ່ລະໄລຍະ;
3. ລາຄານຳເຂົ້ານ້ຳມັນເຊື້ອໄຟຕົວຈິງ (CIF);
4. ລາຄາສະເລ່ຍຂອງລາຄາອ້າງອີງ ພາຍໃນ 15 ວັນ ທີ່ລາຄານ້ຳມັນເຊື້ອໄຟມີການເໜັງຕີງ;

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບກະຊວງການເງິນ, ສະມາຄົມນ້ຳມັນເຊື້ອໄຟ ຄົ້ນຄວ້າ ແລະ ກຳນົດລາຄານ້ຳມັນເຊື້ອໄຟ ຂຶ້ນ ຫຼື ລົງ ບໍ່ເກີນອັດຕາສ່ວນ 5% ຂອງລາຄາຂາຍຍ່ອຍ, ຖ້າເກີນອັດຕາສ່ວນ 5% ຂຶ້ນໄປ ແມ່ນໃຫ້ນຳສະເໜີລັດຖະບານພິຈາລະນາ ແລະ ລັດຖະບານຈະພິຈາລະນາ ພາຍໃນ 05 ວັນ ຫຼັງໄດ້ຮັບການສະເໜີຈາກກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 46 ການກວດນັບບໍລິມາດນ້ຳມັນເຊື້ອໄຟ ກ່ອນການປັບລາຄານ້ຳມັນເຊື້ອໄຟ**

ກ່ອນຈະປັບລາຄານ້ຳມັນເຊື້ອໄຟ ຂຶ້ນ ຫຼື ລົງ ໃນແຕ່ລະຄັ້ງ ຜູ້ດຳເນີນທຸລະກິດນ້ຳມັນເຊື້ອໄຟຕ້ອງແຈ້ງບໍລິມາດນ້ຳມັນຄ້າງສາງ ແລະ ປ້ຳນ້ຳມັນເຊື້ອໄຟຂອງຕົນ ໃຫ້ຂະແໜງການເງິນ ແລະ ຂະແໜງອຸດສາຫະກຳ ແລະ ການຄ້າ ຊາບກ່ອນ 03 ວັນ. ຈາກນັ້ນ ຂະແໜງການເງິນ, ຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ສົມທົບກັບຜູ້ປະກອບການ ກວດນັບບໍລິມາດນ້ຳມັນຄ້າງສາງ ແລະ ປ້ຳ ນ້ຳມັນເຊື້ອໄຟ ເພື່ອໄລ່ລຽງພັນທະຕ່າງໆ.

**ມາດຕາ 47 ການແຈ້ງການປັບລາຄານ້ຳມັນເຊື້ອໄຟ**

ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງການປັບລາຄານ້ຳມັນເຊື້ອໄຟແຕ່ລະຄັ້ງ ໃຫ້ກະຊວງການເງິນເພື່ອເກັບພັນທະພາສີ-ອາກອນ ແລະ ພັນທະອື່ນ ຕາມໂຄງສ້າງລາຄານ້ຳມັນເຊື້ອໄຟທີ່ໄດ້ປັບປຸງໃໝ່. ແລະ ເຜີຍແຜ່ຕໍ່ສັງຄົມ ພ້ອມທັງຊີ້ແຈງສາເຫດຂອງການປັບລາຄາ, ລາຄາອ້າງອີງ ໃນການກຳນົດລາຄາ ນ້ຳມັນເຊື້ອໄຟ ໂດຍຖືກຕ້ອງຕາມຫຼັກການ.

ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງການປັບລາຄານ້ຳມັນເຊື້ອໄຟ ພ້ອມທັງຊີ້ແຈງສາເຫດຂອງການປັບ ແລະ ລາຄາອ້າງອີງ ໃຫ້ສະມາຄົມນ້ຳມັນເຊື້ອໄຟ ແລະ ຜູ້ດຳເນີນທຸລະກິດນ້ຳມັນເຊື້ອໄຟຮັບຊາບ ລ່ວງໜ້າ 03 ວັນ ພ້ອມທັງເຜີຍແຜ່ໃຫ້ສັງຄົມທົ່ວໄປຮັບຊາບ ລ່ວງໜ້າ 01 ວັນ ກ່ອນຈັດຕັ້ງປະຕິບັດລາຄາປັບປຸງໃໝ່.

ສະມາຄົມນ້ຳມັນເຊື້ອໄຟ ຕ້ອງຕິດຕາມການປະຕິບັດລາຄານ້ຳມັນເຊື້ອໄຟ ຂອງບໍລິສັດ ນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ແລະ ບໍລິສັດຈຳໜ່າຍພາຍໃນ ຕາມແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ.

ບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ຕ້ອງແຈ້ງໃຫ້ລູກຄ້າຂອງຕົນ, ບໍລິສັດຈຳໜ່າຍພາຍໃນ ຕ້ອງແຈ້ງໃຫ້ປ້ຳນ້ຳມັນເຊື້ອໄຟຂອງຕົນ ພ້ອມທັງຕິດຕາມການປະຕິບັດລາຄານ້ຳມັນເຊື້ອໄຟ.

ປ້ຳນ້ຳມັນເຊື້ອໄຟ ຕ້ອງຕິດປະກາດ ແຈ້ງໃຫ້ຜູ້ຊົມໃຊ້ຮັບຊາບ ກ່ຽວກັບການປັບລາຄານ້ຳມັນເຊື້ອໄຟແຕ່ລະຄັ້ງ.

## ພາກທີ V

## ກອງທຶນນ້ຳມັນເຊື້ອໄຟ

**ມາດຕາ 48 ກອງທຶນນ້ຳມັນເຊື້ອໄຟ**

ກອງທຶນນ້ຳມັນເຊື້ອໄຟ ແມ່ນກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນເພື່ອຮັກສາສະຖຽນລະພາບທາງດ້ານລາຄາ, ຮັບປະກັນການສະໜອງນ້ຳມັນເຊື້ອໄຟໃຫ້ແກ່ສັງຄົມ ແລະ ເປັນແຫຼ່ງທຶນປະກອບສ່ວນເຂົ້າໃນດັດສົມລາຄານ້ຳມັນເຊື້ອໄຟພາຍໃນປະເທດ.

ແຫຼ່ງກອງທຶນນ້ຳມັນເຊື້ອໄຟ ແມ່ນ ກຳນົດໄວ້ໃນລະບຽບການຕ່າງຫາກຕາມການຕົກລົງຂອງລັດຖະບານ ໃນແຕ່ລະໄລຍະ.

ຜູ້ດຳເນີນທຸລະກິດນ້ຳມັນເຊື້ອໄຟ ມີໜ້າທີ່ມອບເງິນເຂົ້າກອງທຶນນ້ຳມັນເຊື້ອໄຟ ຕາມການກຳນົດໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ຊຶ່ງລັດຖະບານຕົກລົງ ເປັນແຕ່ລະໄລຍະ.

**ມາດຕາ 49 ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນ**

ກະຊວງການເງິນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຄຸ້ມຄອງ ແລະ ນຳໃຊ້ກອງທຶນນ້ຳມັນເຊື້ອໄຟ ຕາມລະບຽບການຂອງກອງທຶນ ໂດຍສອດຄ່ອງກັບກົດໝາຍ.

## ພາກທີ VI
## ສະມາຄົມນ້ຳມັນເຊື້ອໄຟ

**ມາດຕາ 50 ສະມາຄົມນ້ຳມັນເຊື້ອໄຟ**

ສະມາຄົມນ້ຳມັນເຊື້ອໄຟ ແມ່ນອົງການຈັດຕັ້ງທາງສັງຄົມ ທີ່ບໍ່ຫວັງຜົນກຳໄລ ຊຶ່ງສ້າງຕັ້ງຂຶ້ນເພື່ອເຕົ້າໂຮມເອົາບັນດາຫົວໜ່ວຍທຸລະກິດນ້ຳມັນເຊື້ອໄຟ ປະເພດບໍລິສັດນຳເຂົ້າ ແລະ ສົ່ງອອກ ນ້ຳມັນເຊື້ອໄຟ, ບໍລິສັດຈຳໜ່າຍພາຍໃນ, ບໍລິສັດໃຫ້ເຊົ່າສາງນ້ຳມັນເຊື້ອໄຟ, ບໍລິສັດໃຫ້ເຊົ່າພາຫະນະຂົນສົ່ງນ້ຳມັນເຊື້ອໄຟ ແລະ ບໍລິສັດໃຫ້ບໍລິການຂົນສົ່ງນ້ຳມັນເຊື້ອໄຟ, ມີພາລະບົດບາດ ປະສານສົມທົບກັບອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ, ໃຫ້ການຊ່ວຍເຫຼືອ, ໃຫ້ຄຳປຶກສາ, ຄຳແນະນຳ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກ.

ຫົວໜ່ວຍທຸລະກິດນ້ຳມັນເຊື້ອໄຟ ຕ້ອງເປັນສະມາຊິກຂອງສະມາຄົມນ້ຳມັນເຊື້ອໄຟ.

**ມາດຕາ 51 ສິດ ແລະ ໜ້າທີ່ ຂອງສະມາຄົມນ້ຳມັນເຊື້ອໄຟ**

ສະມາຄົມນ້ຳມັນເຊື້ອໄຟ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີຄຳເຫັນກ່ຽວກັບການສ້າງ ແລະ ປັບປຸງນິຕິກຳ, ການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ສະເໜີຕໍ່ອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ;
2. ເຜີຍແຜ່ນິຕິກຳ ແລະ ຂໍ້ມູນຂ່າວສານກ່ຽວກັບທຸລະກິດນ້ຳມັນເຊື້ອໄຟໃຫ້ສະມາຊິກ;
3. ຢັ້ງຢືນແຜນການນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟ ປະຈຳປີ ຂອງບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ກ່ອນນຳສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາ;
4. ໄດ້ຮັບຂໍ້ມູນຈາກສະມາຊິກຂອງສະມາຄົມ ແລະ ອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ;
5. ເປັນຂົວຕໍ່ປະສານງານລະຫວ່າງອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ແລະ ສະມາຊິກ;
6. ຕິດຕາມການເຄື່ອນໄຫວຂອງສະມາຊິກໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ;
7. ໄກ່ເກ່ຍຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງສະມາຊິກດ້ວຍກັນ;
8. ສະເໜີຍ້ອງຍໍສະມາຊິກທີ່ມີຜົນງານດີເດັ່ນໃນການເຄື່ອນໄຫວທຸລະກິດ ແລະ ປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ;
9. ສັງລວມ ແລະ ລາຍງານ ການນຳເຂົ້າ ແລະ ການຈຳໜ່າຍນ້ຳມັນເຊື້ອໄຟ ປະຈຳປີ ຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງການເງິນ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 52 ການຈັດຕັ້ງ ແລະ ເຄື່ອນໄຫວຂອງສະມາຄົມນ້ຳມັນເຊື້ອໄຟ**

ສຳລັບໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມນ້ຳມັນເຊື້ອໄຟ ລວມທັງລະບອບວິທີເຮັດວຽກ ໄດ້ກຳນົດໃນກົດລະບຽບຂອງສະມາຄົມ ທີ່ໄດ້ຜ່ານການຮັບຮອງຈາກສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ແລະ ອະນຸມັດໂດຍກະຊວງອຸດສາຫະກຳ ແລະ ການຄ້າ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 53 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກກີດຂວາງ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ;
2. ດຳເນີນທຸລະກິດນ້ຳມັນເຊື້ອໄຟ ໂດຍບໍ່ໄດ້ຮັບອະນຸຍາດ;
3. ຄ່ຽນຖ່າຍນ້ຳມັນເຊື້ອໄຟ ບໍ່ຖືກຕ້ອງຕາມດຳລັດສະບັບນີ້ ແລະ ກົດໝາຍທີ່ກ່ຽວຂ້ອງ;
4. ໃຫ້ການຊ່ວຍເຫຼືອ, ປົກປ້ອງຜູ້ລະເມີດ;
5. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 54 ຂໍ້ຫ້າມສຳລັບບໍລິສັດນຳເຂົ້າ ແລະ ສົ່ງອອກ ນ້ຳມັນເຊື້ອໄຟ**

ຫ້າມບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ມີພຶດຕິກຳ ດັ່ງນີ້:

1. ນຳເຂົ້າ ແລະ ສະໜອງ ນ້ຳມັນເຊື້ອໄຟທີ່ບໍ່ໄດ້ມາດຕະຖານແຫ່ງຊາດ;
2. ກັກຕຸນນ້ຳມັນເຊື້ອໄຟ ເພື່ອເກັງກຳໄລ ຫຼື ປັ່ນປ່ວນຕະຫຼາດ;
3. ສະໜອງນ້ຳມັນເຊື້ອໄຟໃຫ້ແກ່ປ້ຳນ້ຳມັນເຊື້ອໄຟ;
4. ມອບສິດໃຫ້ບໍລິສັດຈຳໜ່າຍພາຍໃນ ຫຼື ບຸກຄົນໃດໜຶ່ງ ນຳເຂົ້ານ້ຳມັນເຊື້ອໄຟ;
5. ເອົາໃບທະບຽນວິສາຫະກິດ ແລະ ໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ໃຫ້ບຸກຄົນອື່ນນຳໃຊ້;
6. ນຳເຂົ້າ ແລະ ສະໜອງນ້ຳມັນເຊື້ອໄຟ ໂດຍບໍ່ຜ່ານສາງ;
7. ນຳເຂົ້ານ້ຳມັນເຊື້ອໄຟ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ຖືກຕ້ອງຕາມການອະນຸຍາດນຳເຂົ້າ ຫຼື ນຳໃຊ້ບໍ່ຖືກຕ້ອງຕາມເປົ້າໝາຍ;
8. ນຳເຂົ້ານ້ຳມັນເຊື້ອໄຟ ໂດຍບໍ່ໄດ້ເສຍພັນທະ ຫຼື ເສຍພັນທະບໍ່ຄົບຖ້ວນ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 55 ຂໍ້ຫ້າມສຳລັບບໍລິສັດຈຳໜ່າຍພາຍໃນ**

ຫ້າມບໍລິສັດຈຳໜ່າຍພາຍໃນ ມີພຶດຕິກຳ ດັ່ງນີ້:

1. ນຳເຂົ້ານ້ຳມັນເຊື້ອໄຟ;
2. ສະໜອງນ້ຳມັນເຊື້ອໄຟທີ່ບໍ່ໄດ້ມາດຕະຖານແຫ່ງຊາດ;
3. ກັກຕຸນນ້ຳມັນເຊື້ອໄຟ ເພື່ອເກັງກຳໄລ ຫຼື ປັ່ນປ່ວນຕະຫຼາດ;
4. ສະໜອງນ້ຳມັນເຊື້ອໄຟ ໃຫ້ແກ່ປ້ຳນ້ຳມັນເຊື້ອໄຟ ທີ່ບໍ່ແມ່ນປ້ຳບໍລິສັດລົງທຶນເອງ ຫຼື ປ້ຳຕົວແທນຂອງຕົນ;
5. ປະຕິເສດ ການສະໜອງນ້ຳມັນເຊື້ອໄຟ ໃຫ້ແກ່ປ້ຳຕົວແທນຂອງຕົນ ໂດຍບໍ່ມີເຫດຜົນ;

6. ເອົາໃບທະບຽນວິສາຫະກິດ ແລະ ໃບຢັ້ງຢືນການເຄື່ອນໄຫວທຸລະກິດ ໃຫ້ບຸກຄົນອື່ນນຳໃຊ້;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 56 ຂໍ້ຫ້າມສຳລັບປໍ້ານໍ້າມັນເຊື້ອໄຟ**

ຫ້າມປໍ້ານໍ້າມັນເຊື້ອໄຟ ມີພຶດຕິກຳ ດັ່ງນີ້:

1. ຈຳໜ່າຍນໍ້າມັນເຊື້ອໄຟທີ່ບໍ່ໄດ້ມາດຕະຖານແຫ່ງຊາດ ຫຼື ບໍ່ເຕັມບໍລິມາດ;
2. ປິດປໍ້າ ຊົ່ວຄາວ ຫຼື ຖາວອນ ໂດຍບໍ່ມີເຫດຜົນ ຫຼື ບໍ່ໄດ້ແຈ້ງໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ, ນະຄອນ ແລະ ຜູ້ຊົມໃຊ້ຮັບຊາບກ່ອນ ສາມວັນ;
3. ຂາຍນໍ້າມັນເຊື້ອໄຟ ໃນລາຄາທີ່ແຕກຕ່າງຈາກລາຄາທີ່ອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ກຳນົດແຕ່ລະໄລຍະ;
4. ຮັບ ແລະ ຂາຍນໍ້າມັນເຊື້ອໄຟຂອງບໍລິສັດຈຳໜ່າຍພາຍໃນທີ່ຕົນບໍ່ໄດ້ເປັນຕົວແທນ;
5. ເອົາໃບທະບຽນວິສາຫະກິດ ແລະ ໃບຢັ້ງຢືນການເຄື່ອນໄຫວທຸລະກິດ ໃຫ້ບຸກຄົນອື່ນນຳໃຊ້;
6. ມີພາຫະນະຂົນສົ່ງ ແລະ ຂົນສົ່ງ ນໍ້າມັນເຊື້ອໄຟ ດ້ວຍຕົນເອງ;
7. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

**ມາດຕາ 57 ຂໍ້ຫ້າມສຳລັບບໍລິສັດໃຫ້ບໍລິການກ່ຽວກັບນໍ້າມັນເຊື້ອໄຟ**

ຫ້າມບໍລິສັດໃຫ້ບໍລິການກ່ຽວກັບມັນເຊື້ອໄຟ ມີພຶດຕິກຳ ດັ່ງນີ້:

1. ໃຫ້ບໍລິການໂດຍບໍ່ໄດ້ເຊັນສັນຍາກັບຫົວໜ່ວຍທຸລະກິດນໍ້າມັນເຊື້ອໄຟໃດໜຶ່ງ;
2. ບັນຈຸນໍ້າມັນເຊື້ອໄຟເກີນບໍລິມາດບັນຈຸຂອງສາງ ຫຼື ພາຫະນະຂົນສົ່ງຕາມກົດໝາຍ;
3. ຖ່ຽນຖ່າຍນໍ້າມັນເຊື້ອໄຟຢູ່ສະຖານທີ່ອື່ນທີ່ບໍ່ໄດ້ຮັບອະນຸຍາດ;
4. ນຳເຂົ້າ ຫຼື ຈຳໜ່າຍນໍ້າມັນເຊື້ອໄຟດ້ວຍຕົນເອງ;
5. ເອົາໃບທະບຽນວິສາຫະກິດ ແລະ ໃບຢັ້ງຢືນການເຄື່ອນໄຫວທຸລະກິດ ໃຫ້ບຸກຄົນອື່ນນຳໃຊ້;
6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

**ມາດຕາ 58 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ ເພື່ອຮຽກຮ້ອງເອົາຜົນປະໂຫຍດ;
2. ບັງຄັບ, ນາບຂູ່, ໃຊ້ຄວາມຮຸນແຮງຕໍ່ຜູ້ດຳເນີນທຸລະກິດ;
3. ກົດໜ່ວງຖ່ວງດຶງ ຫຼື ແກ່ຍາວເວລາ ໃນການພິຈາລະນາເອກະສານ;
4. ປະລະໜ້າທີ່, ຂາດຄວາມຮັບຜິດຊອບ ແລະ ບິດເບືອນຄວາມຈິງ;
5. ປົກບັງ, ປົກປ້ອງ ແລະ ໃຫ້ຄວາມຮ່ວມມືແກ່ຜູ້ກະທຳຄວາມຜິດ;
6. ປອມແປງເອກະສານ ຫຼື ໃຊ້ເອກະສານປອມ, ເປີດເຜີຍຄວາມລັບທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ດຳເນີນທຸລະກິດທີ່ກ່ຽວຂ້ອງ;
7. ອະນຸຍາດເຄື່ອນໄຫວທຸລະກິດນໍ້າມັນເຊື້ອໄຟ ໂດຍບໍ່ຖືກຕ້ອງຕາມເງື່ອນໄຂ ແລະ ຂັ້ນຕອນ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VIII
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 59 ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານປະຊາຊົນ;
5. ການແກ້ໄຂຂໍ້ຂັດແຍ່ງສາກົນ.

### ມາດຕາ 60 ການປະນີປະນອມ

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ ຄູ່ກໍລະນີສາມາດແກ້ໄຂຂໍ້ຂັດແຍ່ງດັ່ງກ່າວດ້ວຍການປຶກສາຫາລື ແລະ ປະນີປະນອມກັນ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

ຄູ່ກໍລະນີສາມາດປະນີປະນອມກັນ ກ່ຽວກັບການລະເມີດສິດຜົນປະໂຫຍດທາງທຸລະກິດນ້ຳມັນເຊື້ອໄຟ. ການຕົກລົງຈາກການປະນີປະນອມ ໃຫ້ປະຕິບັດຕາມຫຼັກການຂອງການເຮັດສັນຍາ ຕາມທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ.

### ມາດຕາ 61 ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີທີ່ມີຂໍ້ຂັດແຍ່ງ ກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ ທີ່ມີລັກສະນະທາງດ້ານບໍລິຫານ ຊຶ່ງຢູ່ພາຍໃຕ້ຄວາມຮັບຜິດຊອບຂອງອົງການຄຸ້ມຄອງວຽກງານທຸລະກິດນ້ຳມັນເຊື້ອໄຟ ຄູ່ກໍລະນີມີສິດ ສະເໜີຕໍ່ອົງການຈັດຕັ້ງດັ່ງກ່າວ ເພື່ອແກ້ໄຂ.

ຄູ່ກໍລະນີສາມາດສະເໜີຕໍ່ອົງການຄຸ້ມຄອງວຽກງານທຸລະກິດນ້ຳມັນເຊື້ອໄຟ ເພື່ອແກ້ໄຂຂໍ້ຂັດແຍ່ງກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ ໂດຍສອດຄ່ອງກັບກົດໝາຍ.

### ມາດຕາ 62 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີທີ່ມີຂໍ້ຂັດແຍ່ງ ກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ ຄູ່ກໍລະນີມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

### ມາດຕາ 63 ການຮ້ອງຟ້ອງຕໍ່ສານປະຊາຊົນ

ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ ຄູ່ກໍລະນີສາມາດຮ້ອງຟ້ອງຕໍ່ສານປະຊາຊົນເພື່ອພິຈາລະນາຕັດສິນ ຕາມກົດໝາຍ.

### ມາດຕາ 64 ການແກ້ໄຂຂໍ້ຂັດແຍ່ງສາກົນ

ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ ທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

# ພາກທີ IX

## ການຄຸ້ມຄອງ ແລະ ການກວດກາ

## ໝວດທີ 1

## ການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ

**ມາດຕາ 65 ອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ**

ລັດຖະບານ ຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບ ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງການເງິນ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 66 ສິດ ແລະ ໜ້າທີ່ ຂອງຂະແໜງການອຸດສາຫະກໍາ ແລະ ການຄ້າ**

ໃນການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ຂະແໜງການອຸດສາຫະກໍາ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ ແລະ ກົດໝາຍ ກ່ຽວກັບທຸລະກິດນໍ້າມັນເຊື້ອໄຟ ເພື່ອນໍາສະເໜີຂັ້ນເທິງພິຈາລະນາ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ ແລະ ກົດໝາຍ ກ່ຽວກັບ ທຸລະກິດນໍ້າມັນເຊື້ອໄຟ ໃຫ້ສັງຄົມຢ່າງທົ່ວເຖິງ;
3. ພິຈາລະນາການສະເໜີສ້າງຕັ້ງ, ອອກໃບຢັ້ງຢືນ, ສັ່ງໂຈະ ຫຼື ຢຸດເຊົາ ການເຄື່ອນໄຫວທຸລະກິດການນາເຂົ້າ ແລະ ສົ່ງອອກ, ຈໍາໜ່າຍພາຍໃນ, ປໍ້າ ແລະ ບໍລິການເຊົ່າສາງນໍ້າມັນເຊື້ອໄຟ ຕາມການແບ່ງຂັ້ນຄຸ້ມຄອງ;
4. ພິຈາລະນາຮັບຮອງແຜນການນໍາເຂົ້າ ແລະ ຈໍາໜ່າຍນໍ້າມັນເຊື້ອໄຟ ປະຈໍາປີ;
5. ສົມທົບກັບກະຊວງພະລັງງານ ແລະ ບໍ່ແຮ່ ຄົ້ນຄວ້າ ແລະ ອອກລະບຽບການກ່ຽວກັບການຜະລິດ ແລະ ປຸງແຕ່ງນໍ້າມັນເຊື້ອໄຟ;
6. ປະສານສົມທົບກັບຂະແໜງການກ່ຽວຂ້ອງຄົ້ນຄວ້າ ແລະ ນໍາສະເໜີລັດຖະບານ ເພື່ອກໍານົດ ແລະ ດັດສົມທຸລະກິດນໍ້າມັນເຊື້ອໄຟ ໃຫ້ເໝາະສົມຕາມສະພາບການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;
7. ຄົ້ນຄວ້າພິຈາລະນາ ການດັດປັບລາຄານໍ້າມັນເຊື້ອໄຟ ໂດຍປະສານສົມທົບກັບກະຊວງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ແລ້ວແຈ້ງໃຫ້ສັງຄົມຮັບຊາບ;
8. ຕິດຕາມ, ກວດກາ ຮ່ວມກັບຂະແໜງການເງິນ ໃນການຄຸ້ມຄອງນໍ້າມັນເຊື້ອໄຟ ທີ່ຖືກຍົກເວັ້ນພາສີ;
9. ຕິດຕາມ, ກວດກາປະລິມານນໍ້າມັນເຊື້ອໄຟແຮສໍາຮອງໄວ້ໃຊ້ ໃນກໍລະນີສຸກເສີນ ຂອງຜູ້ດໍາເນີນທຸລະກິດນໍ້າມັນເຊື້ອໄຟ ທຸກ 30 ວັນ;
10. ຝຶກອົບຮົມ ແລະ ອອກໃບຢັ້ງຢືນການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ;
11. ຮັບ ແລະ ພິຈາລະນາ ແກ້ໄຂຄໍາສະເໜີຂອງຜູ້ດໍາເນີນທຸລະກິດນໍ້າມັນເຊື້ອໄຟ ແລະ ຜູ້ຊົມໃຊ້;
12. ຊີ້ນໍາສະມາຄົມນໍ້າມັນເຊື້ອໄຟ ໃຫ້ເຄື່ອນໄຫວ ຢ່າງເປັນປົກກະຕິ;
13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
14. ປະສານສົມທົບກັບບັນດາຂະແໜງການຕ່າງໆທີ່ກ່ຽວຂ້ອງ ກັບທຸລະກິດນໍ້າມັນເຊື້ອໄຟ;
15. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 67 ສິດ ແລະ ໜ້າທີ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ສ້າງນະໂຍບາຍ ແລະ ກົດໝາຍ ກ່ຽວກັບການປຸກສ້າງສາງ, ປໍ້າ, ການຂົນສົ່ງ ແລະ ພາຫະນະຂົນສົ່ງນໍ້າມັນເຊື້ອໄຟ ເພື່ອນໍາສະເໜີຂັ້ນເທິງພິຈາລະນາ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ ແລະ ກົດໝາຍ ກ່ຽວກັບການປຸກສ້າງສາງ, ປໍ້າ, ການຂົນສົ່ງ ແລະ ພາຫະນະຂົນສົ່ງນໍ້າມັນເຊື້ອໄຟ ໃຫ້ສັງຄົມ ຢ່າງທົ່ວເຖິງ;
3. ພິຈາລະນາການສະເໜີສ້າງຕັ້ງ, ອອກໃບຢັ້ງຢືນ, ສັ່ງໂຈະ ຫຼື ຍຸດເຊົາ ການອະນຸຍາດປຸກສ້າງ ແລະ ໃບຢັ້ງຢືນຄວາມຖືກຕ້ອງ ຂອງການປຸກສ້າງສາງ ແລະ ປໍ້ານໍ້າມັນເຊື້ອໄຟ;
4. ຄຸ້ມຄອງ ແລະ ກວດກາ ການປຸກສ້າງສາງ, ປໍ້າ ແລະ ສິ່ງປຸກສ້າງອື່ນ ທີ່ກ່ຽວຂ້ອງກັບກິດຈະການບໍລິການນໍ້າມັນເຊື້ອໄຟ;
5. ພິຈາລະນາອອກ, ໂຈະ ຫຼື ຖອນ ໃບອະນຸຍາດການເຄື່ອນໄຫວທຸລະກິດເຊົ່າພາຫະນະຂົນສົ່ງ ແລະ ບໍລິການຂົນສົ່ງນໍ້າມັນເຊື້ອໄຟ;
6. ກໍານົດເຕັກນິກພາຫະນະຂົນສົ່ງນໍ້າມັນເຊື້ອໄຟ;
7. ປະສານສົມທົບກັບບັນດາກະຊວງການຕ່າງໆ ທີ່ກ່ຽວຂ້ອງກັບທຸລະກິດນໍ້າມັນເຊື້ອໄຟ;
8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 68 ສິດ ແລະ ໜ້າທີ່ ຂອງກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ**

ໃນການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ສ້າງນະໂຍບາຍ ແລະ ກົດໝາຍ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທໍາມະຊາດ ກ່ຽວກັບການສ້າງຕັ້ງສາງ ແລະ ປໍ້ານໍ້າມັນເຊື້ອໄຟ;
2. ໂຄສະນາ, ເຜີຍແຜ່ນະໂຍບາຍ ແລະ ກົດໝາຍ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທໍາມະຊາດ ກ່ຽວກັບການສ້າງຕັ້ງສາງ ແລະ ປໍ້ານໍ້າມັນເຊື້ອໄຟ ໃຫ້ສັງຄົມ ຢ່າງທົ່ວເຖິງ;
3. ພິຈາລະນາ ການສະເໜີສ້າງຕັ້ງ, ອອກໃບຢັ້ງຢືນ, ສັ່ງໂຈະ ຫຼື ຢຸດເຊົາ ໃບຢັ້ງຢືນກ່ຽວກັບບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທໍາມະຊາດ, ແຜນຄຸ້ມຄອງ ແລະ ຕິດຕາມສິ່ງແວດລ້ອມ ໃຫ້ແກ່ຜູ້ດໍາເນີນທຸລະກິດນໍ້າມັນເຊື້ອໄຟ;
4. ຮັບຄໍາສະເໜີ ແລະ ລາຍງານ ບັນຫາສິ່ງແວດລ້ອມຈາກປະຊາຊົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ພ້ອມທັງແກ້ໄຂຂໍ້ຂັດແຍ່ງ ຕາມຄວາມຮັບຜິດຊອບຂອງຕົນ;
5. ສະເໜີຕໍ່ການຈັດຕັ້ງທີ່ກ່ຽວຂ້ອງ ປັບປຸງ, ດັດແກ້, ໂຈະ ຫຼື ຍົກເລີກ ກິດຈະການທີ່ກໍ່ໃຫ້ເກີດຜົນກະທົບ ຫຼື ຄວາມປອດໄພຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ ແລະ ສິ່ງທີ່ມີຊີວິດອື່ນໆ;
6. ປະສານສົມທົບ ກັບບັນດາກະຊວງການຕ່າງໆ ທີ່ກ່ຽວຂ້ອງກັບທຸລະກິດນໍ້າມັນເຊື້ອໄຟ;
7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 69 ສິດ ແລະ ໜ້າທີ່ ຂອງກະຊວງການປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ກະຊວງການປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ສ້າງນະໂຍບາຍ ແລະ ກົດໝາຍ ກ່ຽວກັບການຄຸ້ມຄອງ, ປ້ອງກັນ, ສະກັດກັ້ນ ແລະ ຕ້ານອັກຄີໄພ;
2. ໂຄສະນາ, ເຜີຍແຜ່ນະໂຍບາຍ ແລະ ກົດໝາຍ ກ່ຽວກັບການຄຸ້ມຄອງ, ປ້ອງກັນ, ສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ສັງຄົມ ຢ່າງທົ່ວເຖິງ;

3. ພິຈາລະນາການສະເໜີ ອອກ ຫຼື ລຶບລ້າງ ໃບຢັ້ງຢືນກວດກາຜ່ານ ແລະ ໃບຢັ້ງຢືນ ກ່ຽວກັບແຜນຜັງລະບົບສະກັດກັ້ນ ແລະ ຕ້ານອັກຄີໄພ ບັນດາຫົວໜ່ວຍທຸລະກິດນໍ້າມັນເຊື້ອໄຟ;
4. ຄຸ້ມຄອງ, ກວດກາ, ຕັກເຕືອນ, ປັບໃໝ ກ່ຽວກັບ ການລະເມີດລະບຽບການວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ບັນດາຫົວໜ່ວຍທຸລະກິດນໍ້າມັນເຊື້ອໄຟ;
5. ປະສານສົມທົບກັບບັນດາຂະແໜງການຕ່າງໆທີ່ກ່ຽວຂ້ອງກັບທຸລະກິດນໍ້າມັນເຊື້ອໄຟ;
6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 70 ສິດ ແລະ ໜ້າທີ່ ຂອງຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ**

ໃນການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ສ້າງນະໂຍບາຍ ແລະ ກົດໝາຍ ກ່ຽວກັບການກວດກາຄຸນນະພາບ ແລະ ມາດຕະຖານ ນໍ້າມັນເຊື້ອໄຟ;
2. ໂຄສະນາ, ເຜີຍແຜ່ນະໂຍບາຍ ແລະ ກົດໝາຍ ກ່ຽວກັບການກວດກາຄຸນນະພາບ ແລະ ມາດຕະຖານ ນໍ້າມັນເຊື້ອໄຟ ໃຫ້ສັງຄົມ ຢ່າງທົ່ວເຖິງ;
3. ພິຈາລະນາການສະເໜີ ອອກ ຫຼື ລຶບລ້າງ ໃບຢັ້ງຢືນຜົນການກວດສອບຄຸນນະພາບນໍ້າມັນເຊື້ອໄຟ ແລະ ໃບຢັ້ງຢືນການກວດສອບຄຸນນະພາບນໍ້າມັນເຊື້ອໄຟ;
4. ຄຸ້ມຄອງ ແລະ ກວດສອບ ດ້ານຄຸນນະພາບ ແລະ ບໍລິມາດກ່ຽວກັບນໍ້າມັນເຊື້ອໄຟ;
5. ກໍານົດມາດຕະຖານບໍລິມາດ ຊັ່ງຜອງພາຫະນະຂົນສົ່ງນໍ້າມັນເຊື້ອໄຟ;
6. ປະສານສົມທົບ ກັບບັນດາຂະແໜງການຕ່າງໆທີ່ກ່ຽວຂ້ອງກັບທຸລະກິດນໍ້າມັນເຊື້ອໄຟ;
7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 71 ສິດ ແລະ ໜ້າທີ່ ຂອງຂະແໜງການການເງິນ**

ໃນການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ຂະແໜງການການເງິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ສ້າງນະໂຍບາຍ ແລະ ກົດໝາຍ ກ່ຽວກັບພາສີ-ອາກອນ ແລະ ພັນທະຕ່າງໆ ໃນການດໍາເນີນທຸລະກິດນໍ້າມັນເຊື້ອໄຟ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ ແລະ ກົດໝາຍ ກ່ຽວກັບພາສີ-ອາກອນ ແລະ ພັນທະຕ່າງໆ ໃນການດໍາເນີນທຸລະກິດນໍ້າມັນເຊື້ອໄຟ ໃຫ້ສັງຄົມ ຢ່າງທົ່ວເຖິງ;
3. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການປະຕິບັດພັນທະທາງດ້ານພາສີ ແລະ ສ່ວຍສາອາກອນ ຂອງທຸລະກິດນໍ້າມັນເຊື້ອໄຟ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;
4. ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງ ພິຈາລະນາໂຈະ ຫຼື ຖອນໃບທະບຽນວິສາຫະກິດ ແລະ ໃບຢັ້ງຢືນ ອື່ນໆ ຖ້າທຸລະກິດນໍ້າມັນເຊື້ອໄຟ ບໍ່ປະຕິບັດພັນທະທາງດ້ານພາສີ, ສ່ວຍສາອາກອນ ແລະ ພັນທະອື່ນ ຕາມການກໍານົດໃນກົດໝາຍ;
5. ປະສານສົມທົບ ກັບບັນດາຂະແໜງການຕ່າງໆທີ່ກ່ຽວຂ້ອງກັບທຸລະກິດນໍ້າມັນເຊື້ອໄຟ;
6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 72 ສິດ ແລະ ໜ້າທີ່ ຂອງຂະແໜງການພະລັງງານ ແລະ ບໍ່ແຮ່**

ໃນການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ຂະແໜງການພະລັງງານ ແລະ ບໍ່ແຮ່ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ສ້າງນະໂຍບາຍ ແລະ ກົດໝາຍ ກ່ຽວກັບການຜະລິດ ແລະ ການປຸງແຕ່ງນໍ້າມັນເຊື້ອໄຟ ຊີວະພາບ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ ແລະ ກົດໝາຍ ກ່ຽວກັບການຜະລິດ ແລະ ການປຸງແຕ່ງນໍ້າມັນເຊື້ອໄຟຊີວະພາບ ໃຫ້ສັງຄົມ ຢ່າງທົ່ວເຖິງ;
3. ສົມທົບກັບກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ອອກລະບຽບການ ກ່ຽວກັບການຜະລິດ ແລະ ປຸງແຕ່ງນໍ້າມັນເຊື້ອໄຟ;
4. ສຶກສາ, ຄົ້ນຄວ້າ ສ້າງຮ່າງນະໂຍບາຍ ແລະ ແຜນພັດທະນາພະລັງງານແຫ່ງຊາດ;
5. ອອກໃບຢັ້ງຢືນທາງດ້ານວິຊາການ ຕໍ່ການລົງທຶນດ້ານທຸລະກິດການຜະລິດ ແລະ ການປຸງແຕ່ງ ນໍ້າມັນເຊື້ອໄຟຊີວະພາບ;
6. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ຜູ້ດໍາເນີນທຸລະກິດການຜະລິດ ແລະ ການປຸງແຕ່ງ ນໍ້າມັນເຊື້ອໄຟຊີວະພາບ;
7. ປະສານສົມທົບ ກັບບັນດາຂະແໜງການຕ່າງໆທີ່ກ່ຽວຂ້ອງກັບທຸລະກິດນໍ້າມັນເຊື້ອໄຟ;
8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 73 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ໃນການສົ່ງເສີມ, ສະໜັບສະໜູນ, ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການດໍາເນີນທຸລະກິດນໍ້າມັນເຊື້ອໄຟ ໂດຍປະສານສົມທົບ, ຮ່ວມມືກັບຂະແໜງການອຸດສາຫະກໍາ ແລະ ການຄ້າ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 74 ການແບ່ງຂັ້ນຄຸ້ມຄອງ**

ມອບໃຫ້ກະຊວງທີ່ເປັນອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ຕາມທີ່ກໍານົດໄວ້ໃນ ມາດຕາ 65 ຂອງດໍາລັດສະບັບນີ້ ຄົ້ນຄວ້າ ແລະ ກໍານົດການແບ່ງຂັ້ນຄຸ້ມຄອງ ຕາມສາຍຕັ້ງໃຫ້ເໝາະສົມ ຕາມພາລະບົດບາດ ແລະ ຂອບເຂດສິດຂອງຕົນ.

## ໝວດທີ 2
## ການກວດກາທຸລະກິດນໍ້າມັນເຊື້ອໄຟ

**ມາດຕາ 75 ອົງການກວດກາທຸລະກິດນໍ້າມັນເຊື້ອໄຟ**

ອົງການກວດກາທຸລະກິດນໍ້າມັນເຊື້ອໄຟ ປະກອບດ້ວຍ:

ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນ ກັບອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ຕາມທີ່ໄດ້ກໍານົດໄວ້ມາດຕາ 63 ຂອງດໍາລັດສະບັບນີ້;

ອົງການກວດກາພາຍນອກ ຊຶ່ງແມ່ນອົງການກວດກາລັດຖະບານ, ອົງການກວດສອບແຫ່ງລັດ ເປັນຜູ້ກວດກາການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ກໍານົດໄວ້ໃນກົດໝາຍ.

**ມາດຕາ 76 ເນື້ອໃນກວດກາ**

ການກວດກາການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ມີເນື້ອໃນດັ່ງນີ້:

1. ປະຕິບັດນະໂຍບາຍ, ກົດໝາຍ ກ່ຽວກັບການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ;
3. ການເຄື່ອນໄຫວຂອງເຈົ້າໜ້າທີ່, ພະນັກງານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ.

### ມາດຕາ 77 ຮູບການກວດກາ

ການກວດກາວຽກງານຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ມີ 3 ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດ ຢ່າງໜ້ອຍ 2 ຄັ້ງ ຕໍ່ປີ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ ຢ່າງໜ້ອຍ 24 ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ການກວດກາ ໃຫ້ດຳເນີນດ້ວຍການກວດກາທາງດ້ານເອກະສານ ແລະ ລົງກວດກາຕົວຈິງ ຢູ່ສະຖານທີ່ກ່ຽວຂ້ອງ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 78 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ຮັບນະໂຍບາຍ ຕາມກົດໝາຍ.

### ມາດຕາ 79 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

### ມາດຕາ 80 ມາດຕະການ ກ່າວເຕືອນ ແລະ ສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ທີ່ລະເມີດລະບຽບການ ເປັນຕົ້ນຂໍ້ຫ້າມ ທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ທີ່ມີລັກສະນະເບົາ ແລະ ເປັນການລະເມີດເທື່ອທຳອິດ ຊຶ່ງບໍ່ແມ່ນການກະທຳຜິດທາງອາຍາ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ ພ້ອມທັງເຮັດບົດບັນທຶກໄວ້.

### ມາດຕາ 81 ມາດຕະການທາງດ້ານວິໄນ

ເຈົ້າໜ້າທີ່ ແລະ ພະນັກງານຂອງລັດທີ່ກ່ຽວຂ້ອງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ, ຈະຖືກລົງວິໄນຕາມທີ່ກຳນົດໄວ້ໃນກົດໝາຍ ເຊັ່ນ:

1. ກ່າວເຕືອນ ຄວາມຜິດຕາມລະບຽບການ ພ້ອມທັງບັນທຶກໄວ້ໃນສຳນວນຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕ່ຳກວ່າເກົ່າ;

4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍ.

ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 82 ມາດຕະການປັບໃໝ**

ຜູ້ດຳເນີນທຸລະກິດນ້ຳມັນເຊື້ອໄຟ ທີ່ລະເມີດດຳລັດສະບັບນີ້ ຈະຖືກປັບໃໝ ຕາມກໍລະນີ ດັ່ງນີ້:

**ກ. ສຳລັບບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ:**

1. ນຳເຂົ້ານ້ຳມັນເຊື້ອໄຟ ທີ່ບໍ່ໄດ້ມາດຕະຖານແຫ່ງຊາດ ຈະໃຫ້ສົ່ງອອກຄືນ ແລະ ປັບໃໝ 10% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ;
2. ສະໜອງນ້ຳມັນເຊື້ອໄຟທີ່ບໍ່ໄດ້ມາດຕະຖານແຫ່ງຊາດ ຈະຖືກຍຶດ ແລະ ປັບໃໝ 50% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ;
3. ສະໜອງນ້ຳມັນເຊື້ອໄຟ ໃຫ້ແກ່ປ້ຳນ້ຳມັນເຊື້ອໄຟ ຈະຖືກປັບໃໝ 50% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ;
4. ປະຕິເສດການສະໜອງນ້ຳມັນເຊື້ອໄຟ ໃຫ້ແກ່ຕົວແທນທີ່ເປັນບໍລິສັດຈຳໜ່າຍພາຍໃນ ຂອງຕົນ ໂດຍບໍ່ມີເຫດຜົນ ຈະຖືກປັບໃໝ 5.000.000 (ຫ້າລ້ານ) ກີບ ຕໍ່ຄັ້ງ;
5. ມອບສິດ ໃຫ້ຕົວແທນທີ່ເປັນບໍລິສັດຈຳໜ່າຍມັນເຊື້ອໄຟພາຍໃນ ຂອງຕົນ ຫຼື ບຸກຄົນໃດໜຶ່ງ ນຳເຂົ້ານ້ຳມັນເຊື້ອໄຟ ຈະຖືກປັບໃໝ 30% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ;
6. ເອົາໃບທະບຽນວິສາຫະກິດໃຫ້ບຸກຄົນອື່ນນຳໃຊ້ ຈະຖືກປັບໃໝ 100.000.000 (ໜຶ່ງຮ້ອຍລ້ານ) ກີບ ຕໍ່ຄັ້ງ ແລະ ຢຸດເຊົາໃຫ້ບຸກຄົນອື່ນນຳໃຊ້;
7. ນຳເຂົ້ານ້ຳມັນເຊື້ອໄຟ ໂດຍບໍ່ມີໃບຢັ້ງຢືນການເຄື່ອນໄຫວທຸລະກິດ ຈະຖືກຍຶດ ແລະ ປັບໃໝ 50% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ;
8. ນຳເຂົ້າ ແລະ ສະໜອງນ້ຳມັນເຊື້ອໄຟ ໂດຍບໍ່ຜ່ານສາງ ຈະຖືກປັບໃໝ 20% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ ແລະ ໃຫ້ເອົາລົງສາງ ຕາມຂັ້ນຕອນ;
9. ນຳເຂົ້ານ້ຳມັນເຊື້ອໄຟ ໂດຍບໍ່ຖືກຕ້ອງຕາມການອະນຸຍາດນຳເຂົ້າ ຈະຖືກຍຶດ ແລະ ປັບໃໝ 50% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ.

**ຂ. ສຳລັບບໍລິສັດຈຳໜ່າຍພາຍໃນ :**

ຫ້າມບໍລິສັດຈຳໜ່າຍພາຍໃນ ມີພຶດຕິກຳ ດັ່ງນີ້:

1. ນຳເຂົ້ານ້ຳມັນເຊື້ອໄຟເອງ ຈະຖືກຍຶດ ແລະ ປັບໃໝ 50% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ;
2. ສະໜອງນ້ຳມັນເຊື້ອໄຟ ທີ່ບໍ່ໄດ້ມາດຕະຖານແຫ່ງຊາດ ຈະຖືກຍຶດ ແລະ ປັບໃໝ 50% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ;
3. ກັກຕຸນນ້ຳມັນເຊື້ອໄຟ ເພື່ອເກັງກຳໄລ ຫຼື ປັ່ນປ່ວນຕະຫຼາດ ຈະຖືກປັບໃໝ 10.000.000 (ສິບລ້ານ) ກີບ ຕໍ່ຄັ້ງ;
4. ສະໜອງນ້ຳມັນເຊື້ອໄຟ ໃຫ້ແກ່ປ້ຳນ້ຳມັນເຊື້ອໄຟ ທີ່ບໍ່ແມ່ນປ້ຳບໍລິສັດລົງທຶນເອງ ຫຼື ປ້ຳຕົວແທນຂອງຕົນ ຈະຖືກປັບໃໝ 50% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ;
5. ປະຕິເສດການສະໜອງນ້ຳມັນເຊື້ອໄຟ ໃຫ້ແກ່ປ້ຳຕົວແທນຂອງຕົນ ໂດຍບໍ່ມີເຫດຜົນ ຈະຖືກປັບໃໝ 5.000.000 (ຫ້າລ້ານ) ກີບ ຕໍ່ຄັ້ງ;
6. ເອົາໃບທະບຽນວິສາຫະກິດ ໃຫ້ບຸກຄົນອື່ນນຳໃຊ້ ຈະຖືກປັບໃໝ 100.000.000 (ໜຶ່ງຮ້ອຍລ້ານ) ກີບ ຕໍ່ຄັ້ງ ແລະ ຢຸດເຊົາໃຫ້ບຸກຄົນອື່ນນຳໃຊ້;
7. ສະໜອງນ້ຳມັນເຊື້ອໄຟ ໂດຍບໍ່ຜ່ານສາງ ຈະຖືກປັບໃໝ 20% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ ແລະ ໃຫ້ເອົາລົງສາງ ຕາມຂັ້ນຕອນ;

8. ນຳເຂົ້ານ້ຳມັນເຊື້ອໄຟ ໂດຍບໍ່ໄດ້ເສຍພັນທະ ຫຼື ເສຍພັນທະບໍ່ຄົບຖ້ວນ ຈະຖືກຍຶດ ແລະ ປັບໃໝ 50% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ.

**ຄ. ສຳລັບຜູ້ດຳເນີນທຸລະກິດປໍ້ານ້ຳມັນເຊື້ອໄຟ**

1. ຈຳໜ່າຍນ້ຳມັນເຊື້ອໄຟ ທີ່ບໍ່ໄດ້ມາດຕະຖານແຫ່ງຊາດ ຈະຖືກຍຶດ ແລະ ປັບໃໝ 20% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ;
2. ຈຳໜ່າຍນ້ຳມັນເຊື້ອໄຟ ບໍ່ເຕັມບໍລິມາດ ຈະຖືກປັບໃໝ 2.000.000 (ສອງລ້ານ) ກີບ ຕໍ່ຄັ້ງ;
3. ປິດປໍ້າ ຊົ່ວຄາວ ຫຼື ຖາວອນ ໂດຍບໍ່ມີເຫດຜົນ ຫຼື ບໍ່ໄດ້ແຈ້ງໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ, ນະຄອນ ແລະ ຜູ້ຊົມໃຊ້ ຮັບຊາບກ່ອນ 3 ວັນ ຈະຖືກປັບໃໝ 5.000.000 (ຫ້າລ້ານ) ກີບ ຕໍ່ຄັ້ງ;
4. ຂາຍນ້ຳມັນເຊື້ອໄຟ ຕ່າງຈາກລາຄາທີ່ອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ກຳນົດແຕ່ລະໄລຍະ ຈະຖືກປັບໃໝ 5.000.000 (ຫ້າລ້ານ) ກີບ ຕໍ່ຄັ້ງ;
5. ຮັບ ແລະ ຂາຍນ້ຳມັນເຊື້ອໄຟ ຂອງບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ຫຼື ບໍລິສັດຈຳໜ່າຍພາຍໃນ ທີ່ເປັນປໍ້າບໍລິສັດລົງທຶນເອງ ຫຼື ຕົນບໍ່ໄດ້ຮັບສິດເປັນຕົວແທນ ຈະຖືກປັບໃໝ 15.000.000 (ສິບຫ້າລ້ານ) ກີບ ຕໍ່ຄັ້ງ;
6. ເອົາໃບທະບຽນວິສາຫະກິດໃຫ້ບຸກຄົນອື່ນນຳໃຊ້ ຈະຖືກປັບໃໝ 30.000.000 (ສາມສິບລ້ານ) ກີບ ຕໍ່ຄັ້ງ;
7. ຈຳໜ່າຍນ້ຳມັນເຊື້ອໄຟ ໂດຍບໍ່ມີໃບຢັ້ງຢືນການເຄື່ອນໄຫວທຸລະກິດ ຈະຖືກປັບໃໝ 10.000.000 (ສິບລ້ານ) ກີບ ຕໍ່ຄັ້ງ;
8. ມີພາຫະນະຂົນສົ່ງນ້ຳມັນ ແລະ ນຳໃຊ້ຂົນສົ່ງນ້ຳມັນເຊື້ອໄຟ ດ້ວຍຕົນເອງ ຈະຖືກປັບໃໝ 15.000.000 (ສິບຫ້າລ້ານ) ກີບ ຕໍ່ຄັ້ງ;
9. ນຳເຂົ້ານ້ຳມັນເຊື້ອໄຟດ້ວຍຕົນເອງ ຈະຖືກຍຶດ ແລະ ປັບໃໝ 50% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ;
10. ຈຳໜ່າຍນ້ຳມັນເຊື້ອໄຟນອກລະບົບ ຈະຖືກຍຶດ ແລະ ປັບໃໝ 50% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ;

**ງ. ສຳລັບຜູ້ດຳເນີນທຸລະກິດໃຫ້ບໍລິການນ້ຳມັນເຊື້ອໄຟ**

1. ໃຫ້ບໍລິການໂດຍບໍ່ໄດ້ເຊັນສັນຍາ ກັບຜູ້ດຳເນີນທຸລະກິດນ້ຳມັນເຊື້ອໄຟໃດໜຶ່ງ ຈະຖືກປັບໃໝ 15.000.000 (ສິບຫ້າລ້ານ) ກີບ ຕໍ່ຄັ້ງ;
2. ບັນຈຸນ້ຳມັນເຊື້ອໄຟເກີນບໍລິມາດບັນຈຸຂອງສາງ ຫຼື ພາຫະນະຂົນສົ່ງ ຕາມກົດໝາຍທີ່ກ່ຽວຂ້ອງ ຈະຖືກປັບໃໝ 15.000.000 (ສິບຫ້າລ້ານ) ກີບ ຕໍ່ຄັ້ງ;
3. ຄ່ຽນຖ່າຍນ້ຳມັນເຊື້ອໄຟ ຢູ່ສະຖານທີ່ອື່ນ ທີ່ບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 15.000.000 (ສິບຫ້າລ້ານ) ກີບ ຕໍ່ຄັ້ງ;
4. ນຳເຂົ້າ ຫຼື ຈຳໜ່າຍນ້ຳມັນເຊື້ອໄຟ ດ້ວຍຕົນເອງ ຈະຖືກຍຶດ ແລະ ແລະ ປັບໃໝ 50% ຂອງມູນຄ່ານ້ຳມັນເຊື້ອໄຟ ທີ່ກວດພົບ;
5. ເອົາໃບທະບຽນວິສາຫະກິດໃຫ້ບຸກຄົນອື່ນນຳໃຊ້ ຈະຖືກປັບໃໝ 30.000.000 (ສາມສິບລ້ານ) ກີບ ຕໍ່ຄັ້ງ.

ມາດຕາ 83 ມາດຕະການທາງແພ່ງ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ບຸກຄົນອື່ນ ຕ້ອງໃຊ້ແທນຄ່າເສຍຫາຍທີ່ຕົນກໍ່ຂຶ້ນ.

**ມາດຕາ 84 ມາດຕະການທາງອາຍາ**

ບຸກຄົນໃດທີ່ໄດ້ລະເມີດດຳລັດສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມກົດໝາຍອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

**ມາດຕາ 85 ມາດຕະການໂທດເພີ່ມ**

ນອກຈາກມາດຕະການຕໍ່ຜູ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 78, 79, 80, 81 ແລະ ມາດຕາ 82 ຂອງດຳລັດສະບັບນີ້ ຜູ້ກະທຳຜິດຍັງຈະຖືກປະຕິບັດມາດຕະການໂທດເພີ່ມ ເປັນຕົ້ນ ການໂຈະ ຫຼື ຖອນທະບຽນວິສາຫະກິດ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 86 ການຈັດຕັ້ງປະຕິບັດ**

ມອບໃຫ້ອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດຂອງຕົນຢ່າງເຂັ້ມງວດ.

ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບກະຊວງກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້.

**ມາດຕາ 87 ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ